ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

29-31 ສິງຫາ 2022
ປີທີ 11
ສະບັບທີ 871

## ກຕທ ແລະ ກະຊວງການຕ່າງປະເທດ ເຊັນບົດບັນທຶກການຮ່ວມມື ແລະ ປະສານງານຮ່ວມກັນ






(ສພຊ) ວັນທີ 23 ສິງຫາ 2022 ທີ່ສະພາແຫ່ງຊາດ ໄດ້ມີພິທີເຊັນບົດບັນທຶກ ວ່າດ້ວຍການຮ່ວມມື ແລະ ການປະສານງານ ລະຫ່ວາງກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດ ແລະ ກະຊວງການຕ່າງປະເທດ ໂດຍການຮ່ວມລົງນາມລະຫວ່າງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດສະພາແຫ່ງຊາດ ແລະ ທ່ານ ສະເຫລີມໄຊ ກົມມະສິດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີບັນດາປະທານ-ຮອງປະທານກຳມາທິການ ພາຍໃນສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການການຕ່າງປະເທດ,ຮອງລັດຖະມົນຕີກະຊວງການຕ່າງປະເທດ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການ ຂອງທັງສອງພາກສ່ວນເຂົ້າຮ່ວມ.

ບົດບັນທຶກວ່າດ້ວຍການຮ່ວມມື ແລະ ການປະສານງານ ລະຫ່ວາງ ກຕທ ສະພາແຫ່ງຊາດ ແລະ ກະຊວງການຕ່າງປະເທດ ເພື່ອຮັບປະກັນໃຫ້ແກ່ການຮ່ວມມື ແລະ ການປະສານງານຮ່ວມກັນ ລະຫວ່າງ ກຕທ ກັບກະຊວງການຕ່າງປະເທດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ຮັບປະກັນໃຫ້ໄດ້ທາງດ້ານເນື້ອໃນສຳຄັນ. ພ້ອມທັງສືບຕໍ່ປະສານສົມທົບກັນໃນການຄົ້ນຄວ້າຮ່າງກົດໝາຍໃນຂົງເຂດການຕ່າງປະເທດ ເປັນຕົ້ນແມ່ນການສ້າງຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ, ການສ້າງສັນຍາສາກົນໃນລະດັບຂອງສະພາແຫ່ງຊາດ, ລະບຽບການວ່າດ້ວຍການໃຫ້ສັດຕະຍາບັນໃຫ້ມີເນື້ອໃນຄົບຖ້ວນ, ຈະແຈ້ງ ແລະ ຮັດກຸມ ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບແນວທາງຂອງພັກ, ຮັບໃຊ້ຜົນປະໂຫຍດລວມຂອງຊາດ ແລະ ປະຊາຊົນ; ສະໜອງບົດລາຍງານ ກ່ຽວ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ພົບປະຜູ້ມີສິດເລືອກຕັ້ງ ຢູ່ແຂວງຈຳປາສັກ



(ສພຊ) ໃນລະຫວ່າງວັນທີ 19-23 ສິງຫາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ພົບປະຜູ້ມີສິດເລືອກຕັ້ງ ຢູ່ແຂວງຈຳ

ອ່ານຕໍ່ໜ້າ 7

## ປະທານ ກສຕສ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ວັນທີ 23 ສິງຫາຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ພ້ອມດ້ວຍຄະນະ ໄດ້ພົບ

ອ່ານຕໍ່ໜ້າ 7

## ສະຫະພັນກຳມະບານລາວ ແລະ ສະຫະພັນກຳມະບານ ສະພາແຫ່ງຊາດ ເຮັດວຽກຮ່ວມກັນ



ໜ້າ 2

## ກອງປະຊຸມຮ່ວມລະຫວ່າງຄະນະປະຈຳ ສະພາແຫ່ງຊາດ ກັບບັນດາກະຊວງ



ໜ້າ 3

## ກຕທ ປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນ ຢ່າງເປັນເຈົ້າການ



ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ໃຫ້ສຳພາດຕໍ່ກົມສື່ມວນຊົນ ໃນວັນທີ 22 ມິຖຸນາຜ່ານມາ ວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຮອດປັດຈຸບັນ, ກຳມາທິການການຕ່າງປະເທດ (ກຕທ) ໄດ້ຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນໃນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ໃນວຽກງານການຕ່າງປະເທດໃນກອບສອງຝ່າຍ ແລະ ຫລາຍຝ່າຍ ຢ່າງເປັນເຈົ້າການ ແລະ ມີຈຸດສຸມ ເຖິງວ່າຈະຢູ່ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ແຕ່ກຳມາທິການການຕ່າງປະເທດກໍໄດ້ເອົາໃຈໃສ່ເຮັດວຽກງານປະສານສົມທົບກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ບັນດາອົງການລັດຖະສະພາພາກພື້ນ ແລະ ສາກົນ ໃນການຈັດກອງປະຊຸມພົບປະແບບທາງໄກ ເພື່ອປຶກສາຫາລືກັນ ເຊິ່ງກໍໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ໂດຍໄດ້ສຸມໃສ່ໂຄສະນາແນວທາງ, ນະໂຍບາຍການຕ່າງປະເທດ ແລະ ນິຕິກຳກ່ຽວຂ້ອງຕ່າງໆຂອງ ສປປລາວ; ເສີມສ້າງ ແລະ ຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສະພາແຫ່ງຊາດລາວກັບບັນດາລັດຖະສະພາ ກໍຄືບັນດາປະເທດຕ່າງໆ ໃນພາກພື້ນ ແລະ ສາກົນດ້ວຍຜົນສຳເລັດອັນຈົບງາມໃນຫລາຍດ້ານເຊັ່ນ:

ໃນກອບການຮ່ວມມືສອງຝ່າຍ ຄະນະຜູ້ແທນຂັ້ນສູງລະດັບຕ່າງໆຂອງສະພາແຫ່ງຊາດ ແລະ ບັນດາສະມາຊິກສະພາແຫ່ງຊາດ ໄດ້ພົບປະແລກປ່ຽນບົດຮຽນ ແລະ ເຮັດວຽກກັບບັນດາປະເທດເພື່ອນມິດຍຸດທະ

ອ່ານຕໍ່ໜ້າ 3


ໜ້າ 2


ໜ້າ 2


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍວັນຍຶດອຳນາດ ຄົບຮອບ 47 ປີ (23/8/1975-23/8/2022) ຢ່າງສຸດໃຈ!

# ສພຂ ເຊກອງ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3




(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມໃນວັນທີ 18 ສິງຫາຜ່ານມາ ພາຍຫລັງທີ່ດຳເນີນມາເປັນເວລາ 3 ວັນເຕັມ (16-18 ສິງຫາ 2022) ທີ່ສະໂມສອນ ສພຂ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງທ່ານ ເຫລັກໄຫລ ສີວິໄລ ເລຂາພັກແຂວງ ເຈົ້າແຂວງເຊກອງ; ມີບັນດາທ່ານການນຳພັກ-ລັດຂັ້ນແຂວງ, ອາດີດການນຳພັກ-ລັດແຂວງ, ອາດີດສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ 100 ກວ່າທ່ານ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ເຊກອງ ຊຸດທີ II ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ພິຈາລະນາ, ຮັບຮອງເອົາເອກະສານສຳຄັນດັ່ງນີ້: ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ພິຈາລະນາ ແລະ ຮັບຮອງເອົາ ຂໍ້ຕົກລົງວ່າດ້ວຍການປະເມີນລາຄາທີ່ດິນຂອບເຂດ 4 ຕົວເມືອງ ຂອງແຂວງເຊກອງ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ ຊຸດທີ II.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມທີ່ສະມາຊິກສະພາປະຊາຊົນແຂວງ ກໍຄືປະຊາຊົນບັນດາເຜົ່າຊາວແຂວງເຊກອງ ທີ່ມີຄວາມສົນໃຈຫລາຍຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ 2 ວາລະແຫ່ງຊາດ ຈາກທ່ານເຈົ້າແຂວງ ແລະ ຈາກ 16 ພາກສ່ວນຂອງແຂວງ; ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຄວາມຕັດສິນໃຈຂອງອົງການປົກຄອງແຂວງ, ພະແນກການ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາແຂວງເຊກອງ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ນຳເອົາແຂວງເຊກອງກ້າວຂຶ້ນຢ່າງໜັກແໜ້ນ.

ພ້ອມດຽວກັນນີ້, ທ່ານປະທານສະພາປະຊາຊົນແຂວງ ຍັງໄດ້ຮຽກຮ້ອງແຕ່ລະພາກສ່ວນຈົ່ງສືບຕໍ່ເສີມຂະຫຍາຍຜົນສຳເລັດທີ່ຍາດມາໄດ້ໃນປີຜ່ານມາ, ສູ້ຊົນ ແລະ ປັບປຸງແກ້ໄຂບັນດາອຸປະສັກ, ສິ່ງກີດຂວາງໃນຂົງເຂດວຽກງານທີ່ຕົນຮັບຜິດຊອບຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນຮັກຊາດພັດທະນາ ເພື່ອສ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງຈະແຈ້ງ, ສືບຕໍ່ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງ, ໂດຍສະເພາະ 2 ວາລະແຫ່ງຊາດ ໃຫ້ເປັນຮູບປະທຳ ແລະ ມີໝາກຜົນຕົວຈິງຫລາຍຂຶ້ນ ແລະ ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການປົກຄອງເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

(ນາງ ນາລີວັນ)

# ສຳເລັດກອງປະຊຸມສະໄໝສາມັນຂອງ ສພຂ ອັດຕະປື

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມພາຍຫລັງດຳເນີນມາເປັນເວລາ 3 ວັນ (15-17 ສິງຫາ 2022) ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື, ມີທ່ານ ເລັດ ໄຊຍະພອນ ເຈົ້າແຂວງອັດຕະປື, ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍບັນດາການນຳຂອງແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວປິດກອງປະຊຸມວ່າ: ຕະຫລອດໄລຍະຂອງການດຳເນີນກອງປະຊຸມ ແມ່ນເຕັມໄປດ້ວຍການປະກອບຄຳຄິດຄຳເຫັນທີ່ມີຫລັກສະນະສ້າງສັນ ແລະ ຄວາມເປັນເອກະພາບສູງ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງອັດຕະປື ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ພ້ອມກັບການປະກອບສ່ວນສຳຄັນຂອງອົງການປົກຄອງແຂວງ ບັນດາພະແນກການທີ່ກ່ຽວຂ້ອງ ທີ່ໄດ້ເປັນເຈົ້າການສະເໜີຊີ້ແຈງອະທິບາຍຕ່າງໆຕໍ່ກອງປະຊຸມ ໄດ້ປະກອບສ່ວນເຮັດໃຫ້ການພິຈາລະນາ ແລະ ຮັບຮອງເອົາບັນຫາເນື້ອໃນສຳຄັນຂອງແຂວງ ເປັນຕົ້ນ: ໄດ້ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງທ່ານ ແສງປະດິດ ສຸດນາມສຸລິນ ເປັນຮອງປະທານ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ພິຈາລະນາຮັບຮັບຮອງການແຕ່ງຕັ້ງທ່ານ ຈິດປະສົງ ສິງສະຫວັດ ເປັນຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຕາມການສະເໜີຂອງທ່ານເຈົ້າແຂວງ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II.

ຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຊຸດທີ II ຄັ້ງນີ້ ແມ່ນໝາກຜົນລວມຍອດແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່, ການຍົກສູງຄວາມຮັບຜິດຊອບທາງດ້ານການເມືອງຂອງບັນທ່ານສະມາຊິກສະພາປະຊາຊົນແຂວງ, ຄວາມຕັດສິນໃຈຂອງອົງການປົກຄອງແຂວງ, ພະແນກການ, ອົງການທີ່ກ່ຽວຂ້ອງທີ່ພ້ອມກັນສືບຕໍ່ພັດທະນາແຂວງອັດຕະປື ໃນທ່າມກາງສະພາບທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ບັນລຸຄາດໝາຍທີ່ວາງໄວ ແລະ ມີຜົນສຳເລັດເປັນຢ່າງດີ.

(ວິນັດ)






## ສະຫະພັນ...

(ສພຊ) ວັນທີ 24 ສິງຫາຜ່ານມາ, ທີ່ສະພາແຫ່ງຊາດ ສະຫາຍ ອຳໄພ ຈິດມານົບ ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ທັງເປັນຮອງປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການມາເຄື່ອນໄຫວວຽກງານຂອງສະຫາຍ ພອນສານ ວິໄລເມົ້ງ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ພ້ອມດ້ວຍຄະນະ.

ຈຸດປະສົງ ກໍເພື່ອຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວວຽກງານຂອງສະຫະພັນກຳມະບານກະຊວງ-ອົງການ ໃນໄລຍະຜ່ານມາ ແລະ ພົບປະເຮັດວຽກ ນຳຄະນະປະທານສະຫະພັນກຳມະບານ ແລະ ຕາງໜ້າຮາກຖານກຳມະບານ.

ໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ຄະນະໄດ້ຮັບຟັງບົດສະຫລຸບການເຄື່ອນໄຫວວຽກງານກຳມະບານ 6 ເດືອນຕົ້ນປີ ແລະ ທິດທາງແຜນການເຄື່ອນໄຫວວຽກງານ 6 ເດືອນທ້າຍປີ 2022 ເຊິ່ງສະຫະພັນກຳມະບານສະພາແຫ່ງຊາດ ມີສະມາຊິກທັງໝົດ 400 ສະຫາຍ, ຍິງ 162 ສະຫາຍ, ມີຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ຊຸດທີ V ຈຳນວນ 11 ສະຫາຍ, ຍິງ 4 ສະຫາຍ ແບ່ງອອກເປັນ 10 ກຳມະບານຮາກຖານ. ໃນໄລຍະ 6 ເດືອນຜ່ານມາ ສະຫະພັນກຳມະບານສະພາແຫ່ງຊາດ ໄດ້ເອົາໃຈໃສ່ອົບຮົມການເມືອງ-ແນວຄິດ ເພື່ອຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຊຸກຍູ້ສະມາຊິກກຳມະບານເຂົ້າຮ່ວມກອງປະຊຸມ ແລະ ເຊື່ອມຊຶມເອກະສານ, ນິຕິກຳຂອງພັກ-ລັດ ຂອງສະພາແຫ່ງຊາດ ໃຫ້ສະມາຊິກກຳມະບານພາຍໃນສະພາແຫ່ງຊາດ; ເອົາໃຈໃສ່ຈັດຕັ້ງປະຕິບັດວຽກປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ ໂດຍສອດຄ່ອງກັບລະບຽບວ່າດ້ວຍການປະຕິບັດນະໂຍບາຍອຸດໜູນຂອງສະຫະພັນກຳມະບານສະພາແຫ່ງຊາດ ສະບັບເລກທີ 22/ສກບ.ສພຊ, ລົງວັນທີ 18 ມັງກອນ 2021; ເອົາໃຈໃສ່ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງຄະນະບໍລິຫານງານກຳມະບານ, ຄະນະກຳມະບານຮາກຖານ, ສະມາຊິກກຳມະບານ ສັງເກດເຫັນວ່າການຈັດຕັ້ງ ກໍຄືສະມາຊິກກຳມະບານ ແມ່ນໄດ້ປະຕິບັດໜ້າທີ່ໄດ້ຖືກຕ້ອງຕາມກົດລະບຽບຂອງກຳມະບານ; ຕິດຕາມກວດກາໜ່ວຍກຳມະບານແຕ່ລະຮາກຖານ ເປັນຕົ້ນການດຳເນີນຊີວິດຂອງແຕ່ລະຮາກຖານ, ການເສຍເງິນບຳລຸງ, ເງິນສະຫວັດດີການ, ການບໍລິຫານ, ຄຸ້ມຄອງວັດຖຸ ແລະ ຊັບສິນຂອງກຳມະບານຕະຫລອດຮອດການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ. ສຳລັບທິດທາງແຜນການ 6 ເດືອນທ້າຍປີ ສະຫະພັນກຳມະບານສະພາແຫ່ງຊາດ ຈະໄດ້ສືບຕໍ່ເອົາໃຈໃສ່ສຶກສາອົບຮົມວຽກງານການເມືອງ-ແນວຄິດໃຫ້ສະມາຊິກກຳມະບານເປັນປົກກະຕິ ໂດຍຮູບການເຊື່ອມຊຶມເອກະສານການຕິດຕາມການດຳເນີນຊີວິດການເມືອງປະຈຳເດືອນຂອງແຕ່ລະໜ່ວຍໃຫ້ເປັນປົກກະຕິ, ການເມືອງ ແລະ ແຜນນະໂຍບາຍຂອງພັກ, ແນວທາງນະໂຍບາຍຂອງລັດ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານຂອງອົງການຈັດຕັ້ງກຳມະບານ ກໍຄືຂອງສະພາແຫ່ງຊາດວາງອອກເປັນແຕ່ລະໄລຍະ ເພື່ອເພີ່ມຄວາມຮັບຮູ້ເຊື່ອມຊຶມກຳແໜ້ນແນວທາງຂອງພັກ, ເນື້ອໃນສຳຄັນຕ່າງໆ, ເພີ່ມສະຕິເປັນເຈົ້າການຕໍ່ການຈັດຕັ້ງ ເຊິ່ງເປັນບ່ອນອີງພື້ນຖານສຳຄັນໃນການຈັດຕັ້ງປະຕິບັດວຽກງານທີ່ຂັ້ນເທິງມອບໝາຍໃຫ້ມີຜົນສຳເລັດ; ສືບຕໍ່ເອົາໃຈໃສ່ປະກອບສ່ວນຢ່າງຕັ້ງໜ້າ ໃນວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກກຳມະບານພາຍໃນສະພາແຫ່ງຊາດ ຕາມລະບຽບທີ່ກ່ຽວຂ້ອງ, ປະສານສົມທົບກັບສະຫະພັນກຳມະບານລາວ ເພື່ອຊຸກຍູ້ສົ່ງເສີມໃຫ້ສະມະຊິກກຳມະບານ ໄດ້ມີການຍົກລະດັບຄວາມຮູ້ດ້ານຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍພັດທະນາວຽກງານກຳມະບານ ກໍຄືວຽກງານວິຊາສະເພາະຂອງສະພາແຫ່ງຊາດໃຫ້ດີຂຶ້ນເປັນກ້າວໆ ສາມາດຮອງຮັບຕໍ່ການປະຕິບັດໜ້າທີ່ການເມືອງ ໃນໄລຍະໃໝ່; ຊຸກຍູ້ການຈັດຕັ້ງຂະບວນການແຂ່ງຂັນ 5 ເປັນເຈົ້າ ຂອງແຕ່ລະໜ່ວຍ ກໍຄືສະຫະພັນກຳມະບານສະພາແຫ່ງຊາດໃຫ້ສຳເລັດຕາມກຳນົດ ເພື່ອຮັບປະກັນການປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່, ສືບຕໍ່ຊຸກຍູ້ຂະບວນການແຂ່ງຂັນກິລາສາມັກຄີ ແລະ ການບໍລິຈາກເລືອດຢ່າງເປັນປົກກະຕິ; ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ໃນຫລາຍບັນຫາທີ່ທັງສອງຝ່າຍມີຄວາມສົນໃຈ.

(ກົງທະນູຄຳ ພິພັດເສລີ)



## ກຕທ...

ກັບຜົນສຳເລັດຂອງການເຄື່ອນໄຫວວຽກງານການຕ່າງປະເທດ ຂອງການນຳຂັ້ນສູງຂອງສະພາແຫ່ງຊາດ ທັງໃນຂອບສອງຝ່າຍ ແລະ ຫລາຍຝ່າຍແຕ່ລະໄລຍະ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ, ຂໍ້ມູນການພົວພັນ ແລະ ຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາຕ່າງປະເທດ ໃຫ້ກະຊວງການຕ່າງປະເທດ; ສະໜອງບົດສະຫລຸບລາຍງານສະພາບການທີ່ພົ້ນເດັ່ນ ໃນຂົງເຂດພາກພື້ນ ແລະ ສາກົນ, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສປປລາວ ລົງນາມ ແລະ ເປັນພາຄີໃນຂອບສອງຝ່າຍ ແລະ ຫລາຍຝ່າຍ, ສະພາບການຄຸ້ມຄອງອົງການຈັດຕັ້ງສາກົນ, ອົງການລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ມາເຄື່ອນໄຫວຢູ່ ສປປ ລາວ, ວຽກງານການພົວພັນຄືນເຊື້ອຊາດລາວ ແລະ ວຽກງານກ່ຽວຂ້ອງອື່ນໆ ໃຫ້ກຳມາທິການການຕ່າງປະເທດ ເປັນແຕ່ລະໄລຍະ; ສະໜັບສະໜູນ ແລະ ຊ່ວຍເຫລືອເຊິ່ງກັນແລະກັນ ໃນການພັດທະນາຊັບພະຍາກອນມະນຸດ ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ, ພິທີການ, ພາສາຕ່າງປະເທດ ແລະ ການສ້າງພະນັກງານແປພາສາ ແນໃສ່ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານການຕ່າງປະເທດໃນໄລຍະໃໝ່ ຕາມຄວາມສາມາດຕົວຈິງຂອງແຕ່ລະພາກສ່ວນ; ສະໜອງຂໍ້ມູນ ແລະ ໃຫ້ທັດສະນະຕໍ່ບັນຫາຕ່າງໆທີ່ຈຳເປັນ ໃຫ້ແກ່ກັນ ແລະ ກັນ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານວິຊາສະເພາະຂອງຕົນຕາມການສະເໜີຂອງແຕ່ລະຝ່າຍ; ພ້ອມດຽວກັນນີ້, ຂໍ້ຕົກລົງດັ່ງກ່າວ ຍັງຈະເປັນເຄື່ອງມືໜຶ່ງທີ່ປະກອບສ່ວນຊ່ວຍໃນການສ້າງຄວາມເຂັ້ມແຂງທາງດ້ານວິຊາການ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງກຳມາທິການ ແລະ ກະຊວງການຕ່າງປະເທດ ໃຫ້ມີຄວາມໃກ້ຊິດສະໜິດສະໜົມ ແລະ ເພີ່ມຄວາມສາມັກຄີຮັກແພງ ລະຫວ່າງສອງພາກສ່ວນໃຫ້ຫລາຍຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)

## ກຕທ...

ສາດ ຜ່ານວີດີໂອທາງໄກ 11 ຄັ້ງ; ຕ້ອນຮັບການນຳຂັ້ນສູງຂອງ ສສ. ຫວຽດນາມ ມາຢ້ຽມຢາມລາວ 8 ຄະນະ; ໃຫ້ການຕ້ອນຮັບ, ການເຂົ້າຢ້ຽມຂໍ່ານັບ ແລະ ເຂົ້າອວຍພອນຂອງບັນດາຄະນະຜູ້ແທນຈາກຕ່າງປະເທດ ລວມທັງທູຕານຸທູດ ແລະ ອົງການຈັດຕັ້ງສາກົນ ປະຈຳ ສປປລາວ ຈຳນວນ 31 ຄັ້ງ, ຈັດຕັ້ງພິທີຍ້ອງຍໍປະດັບຫລຽນໄຊແຮງງານ ຊັ້ນ I ແລະ ຊັ້ນ II ຂອງ ສສ.ຫວຽດນາມ ໃຫ້ແກ່ຄະນະນຳຂອງສະພາແຫ່ງຊາດ 3 ທ່ານ ແລະ ຍ້ອງຍໍປະດັບຫລຽນໄຊອິດສະຫລະຊັ້ນ I ແລະ ຊັ້ນ II ຂອງ ສປປລາວ ໃຫ້ແກ່ກົມກອງຕ່າງປະເທດ 3 ກົມກອງ ເປັນເຈົ້າການປະສານສົມທົບກັບບັນດາລັດຖະສະພາຕ່າງປະເທດໃນການຊ່ວຍເຫລືອ ແລະ ສະໜັບສະໜູນສະພາແຫ່ງຊາດລາວ, ໃນນັ້ນໄດ້ຮັບທຶນການສຶກສາ ຂອງສະພາແຫ່ງຊາດກຳປູເຈຍ ຈຳນວນ 5 ທຶນ, ລົດດັບເພີງ, ລົດປ້ຳນ້ຳ ແລະ ລົດສຸກເສີນ (Ambulance) ຈຳນວນ 8 ຄັນ ຂອງ ສ.ເກົາຫລີ, ອຸປະກອນຕ່າງໆ ເພື່ອປ້ອງກັນພະຍາດໂຄວິດ-19 ຈາກ ສສ.ຫວຽດນາມ, ໄທ, ສ.ເກົາຫລີ ແລະ ພິເສດ ສປຈີນ ໄດ້ປະກາດມອບຢາວັກຊີນ ຈຳນວນໜຶ່ງໃຫ້ແກ່ ສປປລາວ ແລະ ອື່ນໆ.

ອັນພົ້ນເດັ່ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍສະຫາຍປະທານສະພາແຫ່ງຊາດລາວ ໄດ້ຢ້ຽມຢາມສັນຖະວະໄມຕີຢ່າງເປັນທາງການຢູ່ ສສ.ຫວຽດນາມ ແລະ ຕ້ອນຮັບການຢ້ຽມຢາມສັນຖະວະໄມຕີຢ່າງເປັນທາງການ ຢູ່ ສປປລາວ ຂອງຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດຫວຽດນາມ, ນຳໂດຍສະຫາຍປະທານສະພາແຫ່ງຊາດຫວຽດນາມ ເຊິ່ງເປັນການຢ້ຽມຢາມເຊິ່ງກັນແລະກັນ ຄັ້ງທຳອິດ ພາຍຫລັງໄດ້ຮັບການເລືອກຕັ້ງ. ຕິດພັນກັບການເຄື່ອນໄຫວດັ່ງກ່າວສອງສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ລົງນາມບົດບັນທຶກການຮ່ວມມື (MOU) ຮ່ວມກັນ 3 ສະບັບ, ພົບປະສອງຝ່າຍ ແລະ ການຢ້ຽມຂໍ່ານັບ ຕິດພັນກັບການຢ້ຽມຢາມຂອງທ່ານປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ລວມທັງໝົດຈຳນວນ 11 ຄະນະ; ນອກຈາກນັ້ນ, ສະພາແຫ່ງຊາດ ສສ.ຫວຽດນາມ ຍັງໄດ້ໃຫ້ການຊ່ວຍເຫລືອສະພາແຫ່ງຊາດລາວທາງດ້ານອຸປະກອນ ແລະ ງົບປະມານ ຈຳນວນໜຶ່ງ.

ໃນກອບການຮ່ວມມືຫລາຍຝ່າຍ ໄດ້ຄົ້ນຄວ້າໃຫ້ຄະນະຜູ້ແທນຂັ້ນສູງລະດັບຕ່າງໆຂອງສະພາແຫ່ງຊາດ ແລະ ບັນດາສະມາຊິກສະພາແຫ່ງຊາດເຂົ້າຮ່ວມກອງປະຊຸມຂອງພາກພື້ນ ແລະ ສາກົນລະດັບຕ່າງໆ ທັງໝົດຈຳນວນ 36 ກອງປະຊຸມ: ໃນນັ້ນ, ໄດ້ເຂົ້າຮ່ວມກອງປະຊຸມຜ່ານຮູບແບບທາງໄກ 24 ຄັ້ງ, ຄະນະຜູ້ແທນນຳໂດຍທ່ານປະທານສະພາແຫ່ງຊາດຈຳນວນ 3 ຄັ້ງ, ຮອງປະທານສະພາແຫ່ງຊາດ 2 ຄັ້ງ, ຂັ້ນປະທານກຳມາທິການ ຈຳນວນ 8 ຄັ້ງ, ຂັ້ນຮອງປະທານກຳມາທິການ ຈຳນວນ 2 ຄັ້ງ ແລະ ຂັ້ນວິຊາການ ຈຳນວນ 9 ຄັ້ງ; ອັນພົ້ນເດັ່ນ, ຄະນະຜູ້ແທນນຳໂດຍທ່ານປະທານກຳມາທິການການຕ່າງປະເທດ ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 144 ທີ່ບາຣີ ປະເທດອິນໂດເນເຊຍ ແລະ ເຂົ້າຮ່ວມກອງປະຊຸມຜ່ານລະບົບທາງໄກ ເຊັ່ນ: ກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມຄະນະບໍລິຫານງານຂອງສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF), ກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 143 ແລະ ກອງປະຊຸມອື່ນໆ; ບັນດາການເຄື່ອນໄຫວຕ່າງປະເທດດັ່ງກ່າວ ໄດ້ເປັນການປະກອບສ່ວນຢ່າງສຳຄັນ ເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປລາວ ກັບຕ່າງປະເທດ ເວົ້າລວມ, ເວົ້າສະເພາະກໍຄື ສະພາແຫ່ງຊາດລາວກັບລັດຖະສະພາຂອງບັນດາປະເທດ ໃຫ້ກ້າວສູ່ລວງເລິກຍິ່ງໆຂຶ້ນ.

ພ້ອມນັ້ນ, ກຕທ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນຢ່າງຫ້າວຫັນ ໃນການປະກອບສ່ວນເຮັດໃຫ້ ສປປລາວ ເປັນລັດທີ່ຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍຢ່າງແທ້ຈິງ ໂດຍໄດ້ມີການປະສານສົມທົບກັບກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ຂະແໜງການຕ່າງໆຂອງລັດຖະບານ ໃນການຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ ເຊັ່ນ: ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ເຊິ່ງໄດ້ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX, ໄດ້ເຂົ້າຮ່ວມແຕ່ຫົວທີໃນການຄົ້ນຄວ້າກ່ຽວກັບຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ, ນຳເອົາບັນດາສົນທິສັນຍາ, ສັນຍາສາກົນ ເຂົ້າກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາໃຫ້ສັດຕະຍາບັນ ໄດ້ຈຳນວນ 4 ສະບັບ ຄື: ສົນທິສັນຍາວ່າດ້ວຍການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ສປປລາວ ແລະ ສສ.ຫວຽດນາມ, ສົນທິສັນຍາວ່າດ້ວຍການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ, ສົນທິສັນຍາແຮງງານສາກົນ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ສົນທິສັນຍາ ວ່າດ້ວຍຂອບແຜນງານການສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ. ກຳມະການ ກຕທ ຍັງໄດ້ເອົາໃຈໃສ່ໃນການຄົ້ນຄວ້າ, ປະກອບຄຳເຫັນ ແລະ ຮັບຮອງຕໍ່ບັນດາກົດໝາຍຕ່າງໆທີ່ທີ່ນຳມາເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ແລະ ນິຕິກຳຕ່າງໆ ທີ່ນຳມາຜ່ານກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ບັນດາກົດໝາຍ ແລະ ນິຕິກຳເຫລົ່ານັ້ນ ມີເນື້ອໃນອັນຄົບຖ້ວນ, ສົມບູນ ແລະ ສາມາດເປັນເຄື່ອງມືຂອງລັດ ໃນການຄຸ້ມຄອງສັງຄົມໃຫ້ມີປະສິດທິພາບສູງສຸດ. ນອກຈາກວຽກງານການສ້າງ ແລະ ປັບປຸງກົດໝາຍແລ້ວ ກຕທ ຍັງໄດ້ເອົາໃຈໃສ່ໃນການປະຕິບັດພາລະບົດບາດໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ ແລະ ບັນດາສົນທິສັນຍາ ແລະ ສັນຍາສາກົນທີ່ ສປປລາວ ເປັນພາຄີຈຳນວນໜຶ່ງ ເປັນຕົ້ນ ຢູ່ນະຄອນຫລວງວຽງຈັນ, ຫລວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ຈຳປາສັກ, ເຊກອງ ແລະ ອັດຕະປື. ທີ່ກ່າວມາທັງໝົດນັ້ນ ກໍ່ລ້ວນແຕ່ແມ່ນການປະກອບສ່ວນຂອງ ກຕທ ໃນການເຮັດໃຫ້ ສປປລາວ ເປັນລັດທີ່ຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍ ຢ່າງແທ້ຈິງ.

ທ່ານຍັງໄດ້ກ່າວຕື່ມອີກວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຮອດປັດຈຸບັນ, ກຕທ ພົບຂໍ້ສະດວກ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

- ຂໍ້ສະດວກ:
  - ໄດ້ຮັບການຊີ້ນຳນຳພາຢ່າງໃກ້ຊິດຈາກຄະນະພັກ, ຄະນະປະຈຳສະພາແຫ່ງຊາດຢ່າງເປັນປົກກະຕິໂດຍສະເພາະຈາກທ່ານປະທານສະພາແຫ່ງຊາດ, ທ່ານຮອງປະທານສະພາແຫ່ງຊາດຜູ້ຊີ້ນຳວຽກງານການຕ່າງປະເທດ ແລະ ຄວາມເປັນເຈົ້າການຊີ້ນຳ ຂອງຄະນະໜ່ວຍພັກຮາກຖານ ກຕທ ແລະ ຄວາມເປັນເຈົ້າການ,ຍົກສູງຄວາມຮັບຜິດຊອບຂອງກຳມາທິການ ຈຶ່ງເຮັດໃຫ້ການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການມີຜົນສຳເລັດເປັນກ້າວໆ;
  - ຍ້ອນ ກຕທ ໄດ້ກຳນົດທິດທາງ, ແຜນການເຄື່ອນໄຫວຂອງຕົນໃນແຕ່ລະໄລຍະ, ພ້ອມທັງມີການຊຸກຍູ້ໃນການຈັດຕັ້ງປະຕິບັດ ແລະ ມີການຕິດຕາມກວດກາເປັນປົກກະຕິ;
  - ຍ້ອນຄວາມເປັນເອກະພາບສູງ ຂອງຄະນະນຳກຳມາທິການ, ຄວາມເປັນເຈົ້າການຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ພະນັກງານທັງໝົດ ຂອງ ກຕທ, ໄດ້ຮັບການຮ່ວມມືຈາກຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະແມ່ນກະຊວງການຕ່າງປະເທດ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຄວາມເປັນເຈົ້າການຂອງກົມທີ່ເປັນເສນາທິການຂອງຕົນ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງກຳມາທິການການຕ່າງປະເທດມີຜົນສຳເລັດອັນຈົບງາມ.
  - ຍ້ອນ ກຕທ ໄດ້ຮັບການຮ່ວມມື ແລະ ສະໜັບສະໜູນເປັນຢ່າງດີ ຈາກບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ກໍຄືບັນດາຂະແໜງການອື່ນໆຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດໜ້າທີ່ຂອງຕົນ.
- ຂໍ້ຫຍຸ້ງຍາກ:
  - ການຈັດຕັ້ງປະຕິບັດນະໂຍບາຍຕ່າງປະເທດ ໂດຍຜ່ານປະຕູດຽວຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ຂອດການປະສານສົມທົບຍັງບໍ່ທັນກົມກຽວເຊິ່ງກັນແລະກັນ ທັງພາຍໃນສະພາແຫ່ງຊາດ ແລະ ລະຫວ່າງ ສະພາແຫ່ງຊາດ ກັບຂະແໜງການຕ່າງໆ ຂອງລັດຖະບານ ບາງຄັ້ງມີລັກສະນະຊັກຊ້າບໍ່ທັນກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ;
  - ການຮັບປະກັນດ້ານງົບປະມານ ສຳລັບການເຄື່ອນໄຫວການຕ່າງປະເທດ ເປັນຕົ້ນການເຂົ້າຮ່ວມກອງປະຊຸມສາກົນ, ການເປັນເຈົ້າພາບຈັດກອງປະຊຸມສາກົນ, ການຕ້ອນຮັບຄະນະຜູ້ແທນ ແລະ ອື່ນໆ ຍັງບໍ່ຄ່ອງແຄ້ວ ແລະ ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ແລະ ຕາມສະພາບຕົວຈິງ;

ການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ລະບາດໄປທົ່ວໂລກເປັນວົງກ້ວາງ ແລະ ສົງຄາມລະຫວ່າງລັດເຊຍ ແລະ ຢູເຄຣນ ອັນເປັນສາເຫດໜຶ່ງໃຫ້ແກ່ການເຄື່ອນໄຫວວຽກງານການຕ່າງປະເທດພົບກັບຄວາມຫຍຸ້ງຍາກ ໃນໄລຍະຜ່ານມາ.

ສຳລັບທິດທາງໃນຕໍ່ໜ້າ ກຕທ ໄດ້ວາງຄາດໝາຍສູ້ຊົນໃນຕໍ່ໜ້າດັ່ງນີ້:

1) ຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ຄື: ໃນການສ້າງ, ປັບປຸງ ແລະ ຮຽບຮຽງກົດໝາຍວ່າດ້ວຍໜັງສືຜ່ານແດນ; ການຕັດສິນບັນຫາພື້ນຖານສຳຄັນຂອງຊາດ ເປັນຕົ້ນ ການເຂົ້າຮ່ວມກອງປະຊຸມປະເພດຕ່າງໆ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ເປັນປົກກະຕິ; ການຕິດຕາມກວດກາໃນຫົວຂໍ້ຕ່າງໆ ທີ່ກ່ຽວຂ້ອງກັບກຳມາທິການ ໃຫ້ໄດ້ 2 ຄັ້ງ, ຮ່ວມກັນຕິດຕາມກວດກາຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃຫ້ໄດ້ 1 ຄັ້ງ ແລະ ຕິດຕາມກວດກາຂອງສາມສະພາແຫ່ງຊາດ ລາວ-ຫວຽດນາມ-ກຳປູເຈຍ ໃຫ້ໄດ້ 1 ຄັ້ງ;

2) ຍົກສູງການຄົ້ນຄວ້າ ແລະ ປະສານງານຮອບດ້ານໃຫ້ແກ່ຄະນະຜູ້ແທນຂັ້ນຕ່າງໆຂອງສະພາແຫ່ງຊາດ ຊຸດທີ IX ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃນການພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ບັນດາປະເທດໃນພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນການໄປຢ້ຽມຢາມ ແລະ ເຮັດວຽກ ຂອງປະທານສະພາແຫ່ງຊາດລາວ ຢູ່ຣາຊະອານາຈັກກຳປູເຈຍ ໃຫ້ທັນໃນປີນີ້ ແລະ ໃນເດືອນກັນຍາ 2022 ຈະຕ້ອນຮັບປະທານສະພາແຫ່ງຊາດກຳປູເຈຍ ມາຢ້ຽມຢາມຢ່າງເປັນທາງການ ຢູ່ ສປປລາວ. ພ້ອມກັນນີ້, ກໍເປັນເຈົ້າການໃນການຕ້ອນຮັບຄະນະຜູ້ແທນລັດຖະສະພາຕ່າງປະເທດ, ບັນດາທຸຕານຸທູດ ແລະ ອົງການຈັດຕັ້ງສາກົນ ປະຈຳ ສປປລາວ ຕາມການສະເໜີ;

3) ເປັນເຈົ້າການໃນການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ກໍຄືວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ (5/9/1962-5/9/2022) ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977- 18/7/2022);

4) ເປັນເຈົ້າການໃນການຄົ້ນຄວ້າ ແລະ ເຂົ້າຮ່ວມກອງປະຊຸມ ຂອງອົງການລັດຖະສະພາພາກພື້ນ ແລະ ສາກົນທີ່ສະພາແຫ່ງຊາດລາວ ເປັນສະມາຊິກ ແລະ ບໍ່ເປັນສະມາຊິກ ຢ່າງມີຈຸດສຸມ;

5) ກະກຽມເປັນເຈົ້າພາບຈັດກອງປະຊຸມຂອງ ກຕທ ກຳປູເຈຍ, ລາວ, ຫວຽດນາມ (CLV) ໃນປີ 2023;

6) ກະກຽມຄວາມພ້ອມໃນການເປັນເຈົ້າພາບກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA), ຄັ້ງທີ 45 ໃນປີ 2024 ແລະ ບັນດາກອງປະຊຸມປີ່ນອ້ອມ;

7) ຍົກລະດັບວິຊາການ, ສ້າງຄວາມເຂັ້ມແຂງໃຫ້ແກ່ກຳມະການ ແລະ ພະນັກງານວິຊາການ ຂອງ ກຕທ ທາງດ້ານວິຊາສະເພາະ ແລະ ພາສາຕ່າງປະເທດໃຫ້ສູງຂຶ້ນ;

8) ລະດົມການຊ່ວຍເຫລືອດ້ານຕ່າງໆ ຈາກສະພາຕ່າງປະເທດ, ຈາກປະເທດເພື່ອນມິດ, ປະເທດເພື່ອນມິດຍຸດທະສາດ ໃນພາກພື້ນ ແລະ ສາກົນ, ບັນດາອົງການຈັດຕັ້ງສາກົນ ແລະ ອື່ນໆ;

9) ສືບຕໍ່ຕິດຕາມສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງໃກ້ຊິດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານການຕ່າງປະເທດ.

## ກອງປະຊຸມ...

(ສພຊ) ໃນວັນທີ 24 ສິງຫາ 2022 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານຄະນະປະຈຳ, ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມມີບັນດາປະທານ-ຮອງປະທານກຳມາທິການ ພາຍໃນສະພາແຫ່ງຊາດ, ບັນດາທ່ານຮອງລັດຖະມົນຕີຈາກກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ທັງນີ້, ເພື່ອປຶກສາຫາລື ແລະ ລາຍງານຜົນກະທົບຕ່າງໆ ຈາກໂຄງການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມໃນຂອບເຂດທົ່ວປະເທດ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການສ້າງແຜນການຕິດຕາມກວດກາໃຫ້ຮອງປະທານຄະນະປະຈຳສະພາແຫ່ງຊາດ ທີ່ຈະລົງຕິດຕາມກວດກາພາຍໃນເດືອນກັນຍາ 2022 ແລະ ເພື່ອຄວາມເປັນເອກະພາບຕໍ່ບັນດາຂໍ້ມູນ ແລະ ເປົ້າໝາຍຕ່າງໆ ທີ່ຈະລົງຕິດຕາມກວດກາຢູ່ແຕ່ລະທ້ອງຖິ່ນ ເປັນຕົ້ນບັນຫາຜົນກະທົບ, ການແກ້ ແລະ ການຊົດເຊີຍ ໃນໄລຍະຜ່ານມາ.

ກອງປະຊຸມ, ໄດ້ຮັບຟັງການລາຍງານຄວາມຄືບໜ້າການແກ້ໄຂບັນຫາທີ່ຄົງຄ້າງຕາມຜົນການຕິດຕາມກວດກາ ປະຈຳປີ 2021 ຂອງກຳມາທິການບັນດາເຜົ່າ ຈາກທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ທ່ານຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຕາງໜ້າຈາກກະຊວງກະສິກຳ ແລະ ປ່າໄມ້; ລາຍງານຜົນການແກ້ໄຂການຕິດຕາມກວດກາເສັ້ນທາງລົດໄຟລາວ-ຈີນ ຈາກກະຊວງໂຍ ທາທິການ ແລະ ຂົນສົ່ງ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຄຳຖາມເຈາະຈີ້ມຂອງທ່ານປະທານກອງປະຊຸມ ເພື່ອເປັນຂໍ້ມູນໃນການກຳນົດເປົ້າໝາຍເຂົ້າໃນແຜນການຕິດຕາມກວດກາ ປະຈຳ 6 ເດືອນທ້າຍປີ 2022 ຂອງຄະນະປະຈຳສະພາແຫ່ງຊາດ.

(ສອນສັກ ວັນວິໄຊ)

# ປະທານ ຄວສຜ ເຂົ້າຮ່ວມການສຳມະນາ ກຸງມຄວາມພ້ອມໄຊສົກຮຽນໃໝ່



(ສພຊ) ທ່ານ ນາງ ທອງໃບ ໄຊຍະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສະພາປະຊາຊົນແຂວງສາລະວັນ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາຄູ ກະກຽມຄວາມພ້ອມໃຫ້ແກ່ການໄຂສົກຮຽນໃໝ່ ປະຈຳປີ 2022 ໃນວັນທີ 17 ສິງຫາ 2022 ຢູ່ທີ່ສະໂມສອນເມືອງວາປີ ໂດຍການເປັນປະທານຂອງທ່ານ ນາງ ຄຳບາງ ໃສຍະມາ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ເຂົ້າຮ່ວມມີທ່ານ ບຸນຍູ້ ຈັນທິລັງສີ ເຈົ້າເມືອງວາປີ, ທ່ານ ນາງ ພູວຽງ ອິນທະສອນ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ມີອຳນວຍການ, ບັນດາທ່ານຄູ-ອາຈານ ໂຮງຮຽນອະນຸບານ, ປະຖົມ-ມັດທະຍົມ ເຂົ້າຮ່ວມທັງໝົດ 460 ກວ່າທ່ານ.

ການສຳມະນາໃນຄັ້ງນີ້, ເພື່ອໃຫ້ຄູ-ອາຈານ ໄດ້ຮັບຮູ້ ແລະ ເຂົ້າໃຈ ສາມາດກຳແໜ້ນຕໍ່ກັບບັນດາບົດບັນຍັດກົດໝາຍ ແລະ ມາດຕະການຕ່າງໆ ທີ່ຈະຕ້ອງໄດ້ສຸມໃສ່ໃຫ້ບັນລຸຕາມແຜນການທີ່ວາງໄວ້ ໃນສົກປີ 2022 ພ້ອມທັງປູກຈິດສຳນຶກໃຫ້ຄູ-ອາຈານ ມີຈັນຍາບັນ, ຮັກສາວິໄນ ແລະ ຂໍ້ຫ້າມຕ່າງໆ ມີຄວາມຊື່ສັດຕໍ່ໜ້າທີ່ວຽກງານ ຮັບຜິດຊອບ.

ໃນທີ່ປະຊຸມ, ບັນດາຄູ-ອາຈານທີ່ເຂົ້າຮ່ວມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2021-2022, ຮັບຟັງເອກະສານຂໍ້ຕົກລົງວ່າດ້ວຍຈັນຍາບັນ, ຂໍ້ຫ້າມ ແລະ ການລົງວິໄນຕໍ່ຄູ ແລະ ບຸກຄະລາກອນ. ພ້ອມນັ້ນ, ຍັງໄດ້ຮັບຟັງການເຜີຍແຜ່ເອກະສານກ່ຽວກັບ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ.

ໃນໂອກາດດຽວກັນ, ທ່ານ ນາງ ທອງໃບ ໄຊຍະສານ ໄດ້ເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາກົດໝາຍຂະແໜງການສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ.

ຫລັງຈາກນັ້ນ, ກໍມີການສົນທະນາແລກປ່ຽນບັນຫາ ແລະ ສິ່ງທ້າທາຍຕ່າງໆ ກັບບັນດາຄູ-ອາຈານ ຢ່າງມີບັນຍາກາດຟົດຟື້ນ ແລະ ເປັນເຈົ້າການ ເຂົ້າໃນ 7 ຫົວຂໍ້ ຄື: ການເຂົ້າຮຽນຂອງນ້ອງນັກຮຽນ ທີ່ຍັງບໍ່ທັນຟົດຟື້ນ ແລະ ການຮຽນ-ການສອນ ຍັງບໍ່ທັນມີຄຸນນະພາບ; ການຕອບສະໜອງຄູ ສຳລັບສາຍອະນຸບານ-ຫ້ອງກຽມບໍ່ພຽງພໍ; ຊຸມຊົນ ສັງຄົມ ບາງບ້ານໃຫ້ການຮ່ວມມືຕໍ່ຂະແໜງການສຶກສາບໍ່ທັນກວ້າງຂວາງ ແລະ ໜັກແໜ້ນ; ຄວາມເປັນເຈົ້າການຂອງອຳນວຍການ ແລະ ຄູສອນຈຳນວນໜຶ່ງຂາດຄວາມເປັນເຈົ້າການໃນການປະຕິບັດໜ້າທີ່; ການລົງຕິດຕາມ, ຊຸກຍູ້ຂອງຫ້ອງການສຶກສາທິການ ແລະ ກິລາ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ ຍ້ອນງົບປະມານມີຈຳກັດ; ການປະສານງານລະຫວ່າງໂຮງຮຽນກັບຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນ ທີ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ມີບາງຄອບຄົວຮອດລະດູການຜະລິດ ເອົາລູກຫລານ ອອກໄປອາໄສ ຢູ່ໄຮ່-ສວນ ເຮັດໃຫ້ລູກຫລານ ຮຽນບໍ່ຄົບຫລັກສູດແລ້ວກໍ່ປະລະການຮຽນ.

(ດີລຳພົນ ພົມມະຈັນ)

# ສພຂ ຮ່ວມກັບແນວລາວສ້າງຊາດ ແລະ ຄະນະໂຄສະນາອົບຮົມແຂວງ ປາຖະກະຖາ 3 ວັນສຳຄັນ



(ສພຊ) ຕອນເຊົ້າວັນທີ 12 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ຮ່ວມກັບອົງການແນວລາວສ້າງຊາດ ແລະ ຄະນະໂຄສະນາອົບຮົມແຂວງ ໄດ້ຈັດພິທີສະເຫລີມສະຫລອງວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 72 ປີ, ວັນຍຶດອຳນາດທົ່ວປະເທດ ຄົບຮອບ 47 ປີ ແລະ ວັນປະກາດໃຊ້ລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ ຢູ່ຫໍວັດທະນະທຳແຂວງ ພາຍໃຕ້ການເປັນປະທານ ແລະ ປາຖະກະຖາ ໂດຍທ່ານ ເພີດ ມາປັນຍາ ຮອງເລຂາພັກແຂວງ, ຜູ້ຊີ້ນຳວຽກງານແນວຄິດທິດສະດີຂັ້ນແຂວງ, ມີບັນດາທ່ານການນຳແຂວງ, ການນຳສະພາປະຊາຊົນແຂວງ, ການນຳເມືອງ, ນັກປະຕິວັດອາວຸໂສ ຕະຫລອດຮອດພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນອ້ອມຂ້າງແຂວງເຂົ້າຮ່ວມ.

ການປາຖະກະຖາຄັ້ງນີ້, ທ່ານ ເພີດ ມາປັນຍາ ໄດ້ຍົກໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນ, ປະຫວັດຄວາມເປັນມາ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ 3 ວັນປະຫວັດສາດດັ່ງກ່າວ ເຊິ່ງເປັນແວ່ນແຍງໃຫ້ແກ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ໄດ້ຮ່ວມແຮງຮ່ວມໃຈ ແລະ ສາມັກຄີກັນເປັນປຶກແຜ່ນແໜ້ນໜາ, ສູ້ຊົນບຸກບືນເຂົ້າຮ່ວມຢ່າງພ້ອມພຽງ ໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແຫ່ງ ສປປລາວ, ສ້າງຜົນງານອັນພົ້ນເດັ່ນໃຫຍ່ຫລວງຫລາຍດ້ານໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

(ນັກຂ່າວ ສພຂ ຫົວພັນ)

# ໄຊຍະບູລີ ປາຖະກະຖາ 5 ວັນປະຫວັດສາດຂອງຊາດ, ຂອງພັກ



(ສພຊ) ພິທີປາຖະກະຖາ 5 ວັນປະຫວັດສາດສຳຄັນຂອງຊາດ, ຂອງພັກ ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 22 ສິງຫາ 2022 ຢູ່ທີ່ຫໍປະຊຸມໃຫຍ່ຂອງແຂວງໄຊຍະບູລີ ໂດຍການປາຖະກະຖາຂອງທ່ານ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ, ເຂົ້າຮ່ວມມີບັນດາສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງ ຕະຫລອດຮອດສະມາຊິກພັກ, ພະນັກງານອ້ອມຂ້າງແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ເພັງນີລັນ ຄຳພັນເພັງ ໄດ້ປາຖະກະຖາ 5 ວັນປະຫວັດສາດສຳຄັນຂອງຊາດຂອງພັກ ເຊິ່ງໄດ້ຍົກໃຫ້ເຫັນເຖິງມູນເຊື້ອແຫ່ງການກຳເນີດເຕີບໃຫຍ່ຂະຫຍາຍຕົວແຕ່ລະໄລຍະຂອງວັນສຳຄັນດັ່ງກ່າວ ເປັນຕົ້ນແມ່ນຂະບວນວິວັດແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງວັນສ້າງຕັ້ງລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ (15/8/1991-13/8/2022); ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 72 ປີ (13/8/1950-13/8/2022 ); ການເຕີບໃຫຍ່ຂະຫຍາຍຕົວວັນສື່ມວນຊົນ ແລະ ວັນພິມຈຳໜ່າຍ ຄົບຮອບ 72 ປີ (13/8/1950-13/8/2022); ວັນຍຶດອຳນາດທົ່ວປະເທດ ຄົບຮອບ 47 ປີ (23/8/1975-23/8/2022) ແລະ ວັນສ້າງຕັ້ງສານປະຊາຊົນແຫ່ງ ສປປ ລາວ ຄົບຮອບ 40 ປີ (15/8/1982-15/812022). ຈຸດປະສົງເພື່ອໂຄສະນາສຶກສາອົບຮົມສະມາຊິກພັກ-ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າໃນທົ່ວແຂວງໄຊຍະບູລີ, ເຫັນໄດ້ບົດບາດ, ຄວາມໝາຍຄວາມສຳຄັນ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງ 5 ວັນປະຫວັດສາດດັ່ງກ່າວເຂົ້າໃນພຶດຕິກຳຕົວຈິງ, ເຝິກຝົນຫລໍ່ຫລອມຕົນເອງເພື່ອຮັບໃຊ້ປະເທດຊາດຮັບໃຊ້ປະຊາຊົນ ແລະ ເພີ່ມທະວີຄວາມຮັບຜິດຊອບໃນການສ້າງຜົນງານ. ພ້ອມດຽວກັນນີ້, ຍັງໃຫ້ຮູ້ເຖິງມູນເຊື້ອຕໍ່ສູ້ອັນພິລະອາດຫານ ແລະ ບໍ່ຍອມຈຳນົນຂອງແນວລາວສ້າງຊາດ ເຊິ່ງແມ່ນອົງການນຳພາຂອງການປະຕິວັດລາວເຫັນໄດ້ເຖິງຄວາມປີຊາສາມາດໃນການໂຄສະນາຂົນຂວາຍ ແລະ ນຳພາຕໍ່ສູ້ຈົນໄດ້ຮັບໄຊຊະນະ ແລະ ຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດຂອງວຽກງານສື່ມວນຊົນ, ລັດຖະທຳມະນູນ, ສານປະຊາຊົນ ແລະ ວັນຍຶດອຳນາດເພື່ອເຮັດໃຫ້ຊັ້ນຄົນຕ່າງໆໃນທົ່ວສັງຄົມມີສະຕິເຄົາລົບ ແລະ ປະຕິບັດກົດໝາຍແນໃສ່ບູລະນະລັດປະຊາທິປະໄຕປະຊາຊົນລາວ ໃຫ້ເປັນລັດແຫ່ງກົດໝາຍເທື່ອລະກ້າວ, ເຮັດໃຫ້ປະຊາຊົນຮັ່ງ ມີຜາສຸກ ປະເທດຊາດຮັ່ງມີເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

(ອິນທີ ຂຽວສີຟ້າ)

# ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຜົ້ງສາລີ



(ສພຊ) ຕອນເຊົ້າວັນທີ 20 ສິງຫາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ວິສາມັນ) ຄັ້ງທີ 17 ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລີພົມ ປະທານ ຄປຈຂ; ມີບັນດາທ່ານ ຄປຈຂ, ກອງເລຂານຸການຊ່ວຍວຽກ ແລະ ຮັບຜິດຊອບເນື້ອໃນກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຂ ຊຸດທີ II, ຮອງເລຂາທິການ ສພຂ ແລະ ວິຊາການກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອການລາຍງານຄວາມພ້ອມໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຂ ຊຸດທີ II, ກອງປະຊຸມຄົບຄະນະ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ແລະ ການກະກຽມຄວາມພ້ອມໃຫ້ແກ່ການຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອຮັບປະກັນໃຫ້ທາງດ້ານເນື້ອໃນ ແລະ ພິທີການມີຄວາມພ້ອມ 100%, ຖືກຕ້ອງ, ສອດຄ່ອງຕາມລະບຽບ, ກົດໝາຍ, ໂດຍສະເພາະດ້ານເນື້ອໃນຕ້ອງມີຄວາມຮັດກຸມ, ຈະແຈ້ງ ແລະ ການອຳນວຍຄວາມສະດວກດ້ານການບໍລິການຕ້ອງຮັບປະກັນທາງດ້ານພິທີການ ແລະ ຫລັກການ ບົນພື້ນຖານການປະຢັດມັດທະຫຍັດ.

ທີ່ກອງປະຊຸມໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ, ຫົວໜ້າກອງເລຂາກອງປະຊຸມ ຂຶ້ນລາຍງານຄວາມພ້ອມດ້ານເນື້ອໃນ ແລະ ການບໍລິຫານພິທີການ ໃຫ້ແກ່ການກະກຽມ ແລະ ການດຳເນີນກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຂ ຊຸດທີ II; ກອງປະຊຸມຄົບຄະນະ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ແລະ ລາຍງານການກະກຽມຄວາມພ້ອມໃຫ້ການຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ຮັບຟັງຕາງໜ້າຈາກ ຄະນະກຳມະການ ສພຂ ລາຍງານການກະກຽມຄວາມພ້ອມດ້ານເນື້ອໃນຕາມຄວາມຮັບຜິດຊອບຂອງຄະນະກຳມະການ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ແລກປ່ຽນຄວາມຄິດເຫັນຕໍ່ກັບການກະກຽມດ້ານເນື້ອໃນ ແລະ ບໍລິຫານພິທີການ ທີ່ເຫັນວ່າຍັງບໍ່ທັນສອດຄອງ, ໂລ່ງລ່ຽນ ເພື່ອຄວາມເປັນເອກະພາບ.

ຕອນທ້າຍຂອງກອງປະຊຸມ, ປະທານກອງປະຊຸມໄດ້ສັງລວມຄືນຜົນຂອງການປະຊຸມຄັ້ງນີ້ ພ້ອມທັງຮຽກຮ້ອງໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ໃຫ້ເອົາໃຈໃສ່ຍົກສູງທາງໜ້າທີ່ຄວາມຮັບຜິດຊອບການເມືອງຂອງຕົນ ແລະ ສຸມໃສ່ປະກອບກອບສ່ວນໃນການກະກຽມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II; ກອງປະຊຸມຄົບຄະນະ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ແລະ ການຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ເພື່ອໃຫ້ 2 ກອງປະຊຸມ ແລະ ການລົງຜັນຂະຫຍາຍ ຂອງ ສສຊ ປະຈຳເຂດເລືອກຕັ້ງ 2 ສາມາດດຳເນີນໄດ້ຕາມແຜນການ ແລະ ເພື່ອຮັບປະກັນໃຫ້ກອງປະຊຸມ ແລະ ການຜັນຂະຫຍາຍເນື້ອໃນມະຕິກອງປະຊຸມສະໄມສາມັນເທື່ອທີ 3 ຂອງ ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດຕາມວັດຖຸປະສົງທີ່ວາງໄວ້ ແລະ ໄດ້ຮັບປະສິດທິພາບ, ປະສິດທິຜົນສູງ ຕໍ່ການກະກຽມໃນຄັ້ງນີ້.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສສຊ ບໍລິຄຳໄຊ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ 119 ຈຸດ

ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX,ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ II ໄດ້ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ, ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ກໍຄື ສພຂບໍລິຄຳໄຊ ສາມາດຍາດໄດ້ຜົນງານທີ່ດີເດັ່ນຄື:

**+ ການປະຕິບັດພາລະບົດບາດດ້ານນິຕິບັນຍັດ ແລະ ດ້ານນິຕິກຳ:** ຈັດຕັ້ງການທາບທາມ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍທີ່ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນຂອງ ສພຊ ຈຳນວນ 16 ສະບັບ, ໃນນີ້ ກົດໝາຍສ້າງໃໝ່ 4 ສະບັບ. ແລະ ປັບປຸງ 12 ສະບັບ; ເຂົ້າຮ່ວມພິຈາລະນາ, ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງບໍລິຄຳໄຊ 5 ປີ (2021-2025) ເຊິ່ງມີທັງໝົດ 22 ສະບັບ, ໃນນີ້ສ້າງໃໝ່ 18 ສະບັບ, ປັບປຸງ 4 ສະບັບ, ນອກຈາກນີ້ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ບໍລິຄຳໄຊ ຊຸດທີ II ໄດ້ພິຈາລະນາຮັບຮອງເອົາແລ້ວ ຈຳນວນ 2 ສະບັບ, ປັບປຸງ 1 ສະບັບ ສ້າງໃໝ່ 1 ສະບັບຄື: ຮ່າງຂໍ້ຕົກລົງວ່າດ້ວຍການມີສ່ວນຮ່ວມຂອງສັງຄົມໃນວຽກງານການສຶກສາ (ປັບປຸງ) ແລະ ຮ່າງຂໍ້ຕົກລົງວ່າດ້ວຍນະໂຍບາຍ ກຳນົດເວລາຫົວໜ່ວຍທົດແທນຄ່າເສຍຫາຍໃຫ້ກັບຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມເມືອງປາກຊັນ (ສ້າງໃໝ່); ໄດ້ປະສານສົມທົບກັບ ສພຂ, ອົງການທີ່ກ່ຽວຂ້ອງ ຈັດຕັ້ງໂຄສະນາເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕິດພັນກັບການເຜີຍແຜ່ບັນດາກົດໝາຍ ທີ່ເຫັນວ່າ ມີຄວາມຈຳເປັນ ແລະ ປະຊາຊົນໃຫ້ຄວາມສົນໃຈ ເປັນຕົ້ນແມ່ນບາງເນື້ອໃນ ມາດຕາກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍອົງການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍຄອບຄົວ, ກົດໝາຍຢາຢາ, ກົດໝາຍວ່າດ້ວຍຢາເສບຕິດ ແລະ ກົດໝາຍອື່ນໆທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ຢູ່ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ແລະ ເມືອງ.

**+ ການປະຕິບັດພາລະບົດບາດ ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ:**

**- ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ:** ເຂົ້າຮ່ວມພິຈາລະນາ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ 2 ວາລະແຫ່ງຊາດ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄລຍະປີ 2021-2023 ແລະ ການແກ້ໄຂບັນຫາຢາເສບຕິດ; ເຂົ້າຮ່ວມພິຈາລະນາບັນຫາສຳຄັນທີ່ເປັນພື້ນຖານສຳຄັນຂອງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ເປັນຕົ້ນ: ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 9 ເດືອນ, ແຜນງົບປະມານແຫ່ງລັດ 10 ເດືອນ, ຄາດຄະເນໝົດປີ 2021 ແລະ ແຜນປີ 2022; ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບຍຸດທະສາດການພັດທະນາພະລັງງານໄຟຟ້າຂອງ ສປປ ລາວ (2021-2030); ຮັບຮອງວິໄສທັດ 20 ປີ (2021-2040), ຍຸດທະສາດ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດີຈີຕອນ 5 ປີ (2021-2025); ຮັບຮອງຜົນການກວດສອບບົດສະຫລຸບຂາດຕົວງົບປະມານແຫ່ງລັດ ແລະ ຜົນການກວດສອບປະຈຳປີ 2020, ບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການ ປີ 2022 ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ; ອົງການໄອຍະການ; ສານປະຊາຊົນສູງສຸດ ແລະ ຮັບຮອງເອົາການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງ ສພຊ ຊຸດທີ IX.

**-ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:** ໃນຖານະທີ່ປະຕິບັດພາລະບົດບາດ



ຄວບຕຳແໜ່ງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເປັນເຈົ້າການໃນການເຂົ້າຮ່ວມຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນໃນກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ເປັນຕົ້ນ: ເຂົ້າຮ່ວມພິຈາລະນາ ແລະ ຮັບຮອງເອົາໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງ ສພຂ ບໍລິຄຳໄຊ ຊຸດທີ II; ຮັບຮອງເອົາໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງແຂວງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ; ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳ 5 ປີ 2021-2025, ແຜນການລົງທຶນຂອງລັດ ປະເພດ V ປະຈຳປີ 2021, ຮັບຮອງເອົາການນຳໃຊ້ເງິນເກີນແຜນ ປະຈຳປີ 2019; ຂອງແຂວງ, ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈຳ 5 ປີ ແລະ ທິດທາງແຜນການ 5 ປີ ຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ສພຂ; ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳຂອງແຂວງ ປະຈຳ 5 ປີ 2021-2025; ພິຈາລະນາຮັບຮອງເອົາການຕົກລົງບັນຫາສຳຄັນຂອງທ້ອງຖິ່ນໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ເປັນຕົ້ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ແລະ ທິດທາງແຜນການປີ 2022; ຮັບຮອງເອົາບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງ ສພຂບໍລິຄຳໄຊ ຊຸດທີ II; ບົດສະຫຼູບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດກາແຫ່ງລັດແຂວງ, ອົງການສອບແຫ່ງລັດປະຈຳພາກກາງ.

**+ ການປະຕິບັດພາລະບົດບາດການຕິດຕາມກວດກາ:** ປະສານສົມທົບກັບ ຄະນະປະຈຳ ສພຂ ໃນການລົງຕິດຕາມກວດກາຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃນກົດໝາຍ ເປັນຕົ້ນ: ຕິດຕາມກວດກາການປະຕິບັດບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປີ 2021, ການຈັດຕັ້ງປະຕິບັດວຽກງານຈັດສັນທີ່ຢູ່ອາໃສ, ວຽກງານພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ, ວຽກງານສາມສ້າງ ໂດຍສຸມໃສ່ບັນດາຈຸດສຸມພັດທະນາຂອງລັດຖະບານ, ຂອງແຂວງ; ຕິດຕາມ ກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂທາງດ້ານເສດຖະກິດການເງິນຢູ່ 3 ເມືອງຄື: ເມືອງວຽງທອງ, ເມືອງຄຳເກີດ ແລະ ໄຊຈຳພອນ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການຮຽນການສອນໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ 5 ເມືອງຄື: ເມືອງຄຳເກີດ, ປາກກະດິງ, ວຽງທອງ, ປາກຊັນ ແລະ ບໍລິຄັນ; ຕິດຕາມ ກວດກາ ຜົນສຳເລັດໂຄງການກໍ່ສ້າງຂົວອູ່ນ້ຳສະໂງຍ, ຢູ່ບ້ານຄຳງູນາ, ເມືອງໄຊຈຳພອນ ທີ່ໄດ້ຮັບການຂໍລະດົມທຶນຊ່ວຍເຫລືອລ້າຈາກ ສພຊ ໂດຍແມ່ນບໍລິສັດ ເຈຍລັນ ພັດທະນາກະສິກຳ ຈຳກັດ ເປັນຜູ້ໃຫ້ທຶນ; ຕິດຕາມກວດກາການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ເຊິ່ງໃນໄລຍະຜ່ານມາ ມີຄຳຮ້ອງທຸກທີ່ຍື່ນຫາ ສພຂ ໂດຍກົງ 53 ເລື່ອງ, ໃນນີ້ ເປັນຄຳຮ້ອງຂໍຄວາມເປັນທຳ 17 ເລື່ອງ, ຄຳສະເໜີ 36 ເລື່ອງ, ຄຳຮ້ອງທຸກດັ່ງກ່າວ ແມ່ນໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂສຳເລັດແລ້ວ 50 ເລື່ອງ, ພວມດຳເນີນການຄົ້ນຄວ້າ 3 ເລື່ອງ, ບັນຫາທີ່ພົ້ນເດັ່ນທີ່ຍື່ນເຂົ້າມາແມ່ນ ບັນຫາຂໍ້ຂັດແຍ່ງທີ່ດິນ ແລະ ບໍ່ພໍໃຈຕໍ່ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

ນອກຈາກນັ້ນ, ຄະນະ ສສຊ ປະຈຳເຂດເລືອກຕັ້ງຍັງໄດ້ເປັນເຈົ້າການ ຍົກສູງຂີດຄວາມສາມາດເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ແລະ ພະນັກງານ-ລັດຖະກອນ ທີ່ເປັນເສນາທິການຊ່ວຍວຽກ ເຊິ່ງຜ່ານມາສາມາດຈັດເຝິກອົບຮົມໄດ້ 1 ຄັ້ງ, ເຂົ້າຮ່ວມກອງປະຊຸມສຳມະນາ, ເຝິກອົບຮົມວຽກງານໃນຫົວຂໍ້ຕ່າງໆ ຕາມການແຈ້ງເຊີນຂອງ ສພຊ ແລະ ພາກສ່ວນຕ່າງໆ ທັງໝົດ 9 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 19 ເທື່ອຄົນ ຍິງ 3 ເທື່ອຄົນ.

ໂອກາດດັ່ງກ່າວ, ທ່ານ ປອ. ສຸວັນນີ ໄຊຊະນະ ໃຫ້ຮູ້ຕື່ມກ່ຽວກັບຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງລັດຖະທຳມະນູນກົດໝາຍ, ມະຕິ ສພຊ, ມະຕິ ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍ ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສສຊ ຊຸດທີ IX ມາຮອດປັດຈຸບັນ ເຊິ່ງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ໄດ້ຖືເອົາການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ, ບັນດາມະຕິຂອງ ສພຊ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ແລະ ບັນດານິຕິກຳໃຕ້ກົດໝາຍເປັນວຽກງານທີ່ສຳຄັນ ເຊິ່ງສະແດງອອກດ້ານຜົນສຳເລັດ ໃນການນຳເອົາເນື້ອໃນຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ບໍລິຄຳໄຊ ຊຸດທີ II ເຄື່ອນໄຫວເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າພາຍໃນແຂວງໄດ້ຮັບຮູ້ ແລະ ເຂົ້າໃຈ ໄດ້ທັງໝົດ 119 ຈຸດ ໃນນັ້ນ, ມີ 107 ບ້ານ, 3 ກົມກອງ, 3 ໂຮງຮຽນ, 1 ດ່ານປະເພນີ ແລະ 5 ສຳນັກເມືອງ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 8.466 ຄົນ ຍິງ 3.313 ຄົນ. ມອບເຄື່ອງອຸປະໂພກ-ບໍລິໂພກໃຫ້ປະຊາຊົນລວມມູນຄ່າ 136 ລ້ານກວ່າກີບ. ພ້ອມດຽວກັນນີ້, ຍັງມີຄຳສະເໜີຂອງພໍ່ແມ່ປະຊາຊົນທີ່ສະເໜີຜ່ານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ໃນເວລາເຄື່ອນໄຫວພົບປະປະຊາຊົນ ເຊິ່ງລວມທັງໝົດ 369 ຂໍ້, ມາເຖິງປັດຈຸບັນ ບັນດາຄຳສະເໜີດັ່ງກ່າວ ແມ່ນໄດ້ຮັບການລາຍງານຜົນການແກ້ໄຂ ມາຍັງ ສສຊປະຈຳເຂດເລືອກຕັ້ງ, ຄະນະປະຈຳ ສພຂ ເປັນສ່ວນຫລາຍແລ້ວ ແລະ ຄຳສະເໜີທີ່ຍັງບໍ່ທັນໄດ້ຮັບການແກ້ໄຂແມ່ນເປັນຄຳສະເໜີທີ່ຕິດພັນກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງເປັນຕົ້ນແມ່ນທາງປູຢາງ, ໂຮງຮຽນ, ໂຮງໝໍ... ເຊິ່ງບັນດາພາກສ່ວນທີ່ກ່ຽວຂ້ອງຈະຕ້ອງໄດ້ສັງລວມເຂົ້າແຜນເພື່ອນຳສະເໜີຫາພາກສ່ວນທີ່ກ່ຽວຂ້ອງ.

ທ່ານຍັງໃຫ້ຮູ້ຕື່ມວ່າ: ໃນຕໍ່ໜ້າ ສພຂ ບໍລິຄຳໄຊ ຈະສູ້ຊົນສຸມໃສ່ໃນການຈັດຕັ້ງປະຕິບັດເປົ້າໝາຍ ໂດຍເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກແຂວງ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຊ, ມະຕິກອງປະຊຸມ ສພຂ ແລະ ນິຕິກຳໃຕ້ກົດໝາຍໃຫ້ເປັນແຜນງານ, ແຜນການ, ໂຄງການ ແລະ ກິດຈະກຳຂອງ ສພຂ; ຄົ້ນຄວ້າ ແລະ ດຳເນີນການປັບປຸງກົງຈັກການຈັດຕັ້ງພາຍໃນ ສພຂ, ລະບົບກົນໄກການປະສານງານລະຫວ່າງ ສພຂ ກັບອົງການປົກຄອງທຸກຂັ້ນ ໃຫ້ມີຄວາມເໝາະສົມ ແລະ ສະດວກໂລ່ງລ່ຽນຫລາຍຂຶ້ນ; ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງ ຂອງ ສສຂ ແລະ ພະນັກງານທີ່ເປັນເສນາທິການໃນການຄົ້ນຄວ້າ, ວິເຄາະວິໄຈ ແລະ ນຳໃຊ້ຜົນການຄົ້ນຄວ້າເຂົ້າໃນການປະກອບຄຳເຫັນ, ການຮ່າງເອກະສານສຳຄັນ, ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ການພິຈາລະນາ, ຮັບຮອງບັນຫາສຳຄັນຂອງທ້ອງຖິ່ນ ຢູ່ໃນກອງປະຊຸມ ສພຂ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກົດໝາຍກຳນົດ; ເພີ່ມທະວີການຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຊ, ມະຕິກອງປະຊຸມ ສພຂ ໃຫ້ເປັນຮູບປະທຳຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ນຳໃຊ້ຜົນຂອງການຕິດຕາມ ກວດກາ ແລະ ສ້າງທຸກເງື່ອນໄຂ ໃນການຊຸກຍູ້ແກ້ໄຂຜົນການຕິດຕາມກວດກາໃຫ້ມີປະສິດທິຜົນ ແລະ ສັກສິດ; ເອົາໃຈໃສ່ຄົ້ນຄ້ວາ, ພິຈາລະນາຄຳຮ້ອງ, ຄຳສະເໜີຂອງພົນລະເມືອງ, ນິຕິບຸກຄົນ ຫລື ການຈັດຕັ້ງ ພ້ອມທັງຊຸກຍູ້ຂະແໜງການກ່ຽວຂ້ອງແກ້ໄຂ ເພື່ອພິຈາລະນາແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ, ປົກປັກຮັກ ສາຜົນປະໂຫຍດລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ; ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານທີ່ເປັນເສນາທິການ ດ້ວຍການຍົກລະດັບທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະທີ່ກ່ຽວຂ້ອງ, ສ້າງ ແລະ ນຳໃຊ້ກົງຈັກການຈັດຕັ້ງທີ່ມີໃຫ້ມີຄວາມເຂັ້ມແຂງ, ຮັບປະກັນທາງດ້ານງົບປະມານ ແລະ ສະໜອງໄດ້ວັດຖຸອຸປະກອນຕາມຄວາມເໝາະສົມ ເພື່ອຮັບໃຊ້ການເຄື່ອນໄຫວໜ້າທີ່ການເມືອງຂອງສະມາຊິກພາປະຊາຊົນແຂວງ ໃຫ້ມີປະສິດທິພາບ, ປະສິດທິຜົນ ເພື່ອໃຫ້ແທດເໝາະກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; ເພີ່ມທະວີການລົງພົບປະປະຊາຊົນ ແລະ ໂຄສະນາເຜີຍແຜ່ບັນດາກົດໝາຍ, ນິຕິກຳ, ພາລະບົດ ບາດ, ສິດ ແລະ ໜ້າທີ່, ມະຕິກອງປະຊຸມ ສພຊ, ມະຕິກອງປະຊຸມ ສພຂ ໃຫ້ກວ້າງຂວາງ, ດ້ວຍຫລາຍຮູບແບບ, ຫລາຍຮູບການ ໃຫ້ປະຊາຊົນບັນດາເຜົ່າ, ຜູ້ປະກອບການ ແລະ ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມ ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

# ມອບ-ຮັບໜ້າທີ່ປະທານ ຄຍປປ ສພຂ ຫົວພັນ

(ສພຊ) ໂດຍປະຕິບັດຕາມມະຕິຂອງຄະນປະຈຳສະພາປະຊາຊົນແຂວງ (ສພຂ) ຫົວພັນ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງກຳມະການຄະນະປະຈຳ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສພຂ ຫົວພັນ ສະບັບເລກທີ 405/ຄປຈຂ.ຫພ, ລົງວັນທີ 10 ສິງຫາ 2022. ໃນວັນທີ12 ສິງຫາ 2022 ສພຂ ຫົວພັນ ໄດ້ຈັດພິທີມອບ-ຮັບໜ້າທີ່ປະທານ ຄຍປປ ລະຫວ່າງທ່ານ ພັທ. ທອງພັນ ພັດທະວົງ ປະທານ ຄຍປປ (ຜູ້ເກົ່າ) ໄປຮັບໜ້າທີ່ໃໝ່ຢູ່ກອງບັນຊາການທະຫານແຂວງຫົວພັນ ແລະ ທ່ານ ປອ. ສົມສັກ ຈັນມາລີ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ເປັນປະທານ ຄຍປປ (ຜູ້ໃໝ່).

ໃນພິທີ, ເຂົ້າຮ່ວມມີທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານ ສພຂ ຫົວພັນ, ມີຮອງປະທານ ສພຂ, ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິ



ການ ສພຂ, ສະມາຊິກສະພາປະຊາຊົນແຂວງ ທີ່ປະຈຳການ ຢູ່ເທສະບານເມືອງຊຳເໜືອ ແລະ ຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ຕະຫລອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ພັທ. ທອງພັນ ພັດທະວົງ ໄດ້ລາຍງານກ່ຽວກັບສະພາບການເຄື່ອນໄຫວ ການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຕົນຮັບຜິດຊອບຢູ່ ສພຂ ຕະຫລອດໄລຍະຜ່ານມາ ແລະ ໜ້າວຽກທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ.

ໂອກາດດຽວກັນນີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດທີ່ປະທານ ຄຍປປ ຜູ້ເກົ່າ ທີ່ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນນີ້, ທ່ານຍັງໄດ້ມີຄຳເຫັນເນັ້ນໜັກຊີ້ນຳໃຫ້ປະທານ ຄຍປປ ຜູ້ເກົ່າ ແລະ ຜູ້ໃໝ່ ເອົາໃຈໃສ່ ແລະ ເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ໃນການນຳພາ-ຊີ້ນຳ ແລະ ການເປັນເສນາທິການໃຫ້ແກ່ກົມກອງຂອງຕົນສັງກັດ ແລະ ສພຂ ໃນການປະຕິບັດໜ້າທີ່ຕາມສິດ, ພາລະບົດບາດຂອງຕົນ ໃຫ້ມີຜົນສຳເລັດຕາມການຈັດຕັ້ງຂັ້ນເທິງມອບໝາຍ.

(ແກ້ວບຸນມີ)

# ບຸນຫໍ່ເຂົ້າປະດັບດິນ

ໂດຍ: ຊຽງນ້ອຍ

108 ສາລະ

ການເຮັດບຸນຫໍ່ເຂົ້າປະດັບດິນ ເປັນປະເພນີໜຶ່ງໃນຮີດສິບສອງ ນິຍົມເຮັດໃນມື້ແຮມ 14 ຄ່ຳເດືອນເກົ້າ, ບຸນຫໍ່ເຂົ້າປະດັບດິນ ເປັນບຸນທີ່ເຮັດຂຶ້ນ ເພື່ອອຸທິດສ່ວນບຸນກຸສົນໄປຫາເຜດ ຫລື ຍາດພີ່ນ້ອງທີ່ລ່ວງລັບໄປແລ້ວ ເຂົ້າປະດັບດິນ ໄດ້ແກ່ເຂົ້າ ແລະ ອາຫານຫວານຄາວ ພ້ອມໝາກພູ ແລະ ຢາສູບ ທີ່ຫໍ່ດ້ວຍໃບຕອງກ້ວຍ ເອົາໄປໄວ້ຕາມເຫງົ້າຕົ້ນໄມ້ ແຂວນໄວ້ຕາມງ່າໄມ້ ຕາມບໍລິເວນຕ້າຍວັດ (ກຳແພງວັດ) ຫລືວາງໄວ້ຕາມພື້ນດິນ ພ້ອມກັບເຊີນວິນຍານຂອງຍາດພີ່ນ້ອງ ແລະ ເອົາພັດຕາຫານໄປຖວາຍແດ່ພະສົງ ສາມະເນນ ແລ້ວອຸທິດສ່ວນກຸສົນແກ່ຜູ້ຕາຍ ໂດຍຢາດນ້ຳ ອຸທິດສ່ວນກຸສົນໄປຫາ.

ມູນເຫດຄວາມເປັນມາ ຂອງເລື່ອງການເຮັດບຸນຫໍ່ເຂົ້າປະດັບດິນ ເກີດຈາກຄວາມເຊື່ອຕາມນິທານທຳມະບົດວ່າ: "ຍາດພີ່ນ້ອງ ຂອງພຣະເຈົ້າພິມພິສານ ໄດ້ຍັກຍອກເງິນວັດຂອງສົງ ໄປເປັນຂອງຕົນເອງ ໃນສະໄໝພະກັດສະປະ ພະພຸດທະເຈົ້າ ພວກອະດີດຍາດພີ່ນ້ອງຂອງພະເຈົ້າພິມພິສານເຫລົ່ານັ້ນ ຕາຍໄປແລ້ວໄດ້ໄປເກີດເປັນເຜດໃນນະຣົກຕະຫລອດພຸດທະທັນດອນ ເມື່ອພຣະເຈົ້າພິມພິສານຖວາຍທານແດ່ ພຣະສະມະນະໂຄດົມພຸດທະເຈົ້າ ໃນພັດທະກັບນີ້ ລືມຢາດນ້ຳອຸທິດສ່ວນກຸສົນໄປໃຫ້ແກ່ພວກຍາດພີ່ນ້ອງເຫລົ່ານັ້ນ ພໍຕົກກາງຄືນມາພວກເຜດຍາດພີ່ນ້ອງຂອງພະເຈົ້າພິມພິສານເຫລົ່ານັ້ນ ໄດ້ມາສົ່ງສຽງຮ້ອງອັນໂຫຍຫວນ ແລະ ສະແດງຮູບຮ່າງອັນເປັນຕາຢ້ານ ໃຫ້ແກ່ພຣະເຈົ້າພິມພິສານ ໄດ້ຍິນ ແລະ ເຫັນ ພໍຮຸ່ງເຊົ້າມື້ໃໝ່ຂຶ້ນມາ ຈຶ່ງໄດ້ສະເດັດໄປຖາມພະພຸດທະເຈົ້າ ພະພຸດທະອົງຊົງເລົ່າເລື່ອງລາວ ທີ່ເປັນມູນເຫດໃຫ້ພະເຈົ້າພິມພິສານໄດ້ຊົງຊາບ ພະເຈົ້າພິມພິສານ ຈຶ່ງໄດ້ເຮັດບຸນຖວາຍທານອີກ



ແລ້ວຈຶ່ງອຸທິດສ່ວນກຸສົນ ໄປໃຫ້ພວກຍາດພີ່ນ້ອງທີ່ຕາຍໄປແລ້ວ ໃຫ້ໄດ້ຮັບສ່ວນກຸສົນ ແລ້ວກໍໄດ້ມາສະແດງຕົນໃຫ້ພະເຈົ້າພິມພິສານເຫັນ ແລະ ຊາບວ່າ ຄວາມທຸກທີ່ພວກເຂົາໄດ້ຮັບນັ້ນໄດ້ທຸເລົາເບົາບາງລົງແລ້ວ ເພາະການອຸທິດສ່ວນກຸສົນຂອງພະອົງ. ດັ່ງນັ້ນ, ຄົນລາວເຮົາ ຈຶ່ງຖືເອົາມູນເຫດນີ້ ເຮັດບຸນຫໍ່ເຂົ້າປະດັບດິນນັບແຕ່ມື້ນັ້ນຕິດຕໍ່ກັນມາບໍ່ໄດ້ຂາດ ສືບທອດມາຈົນເຖິງປັດຈຸບັນ.

ສ່ວນວິທີການເຮັດບຸນຫໍ່ເຂົ້າປະດັບດິນນັ້ນ ພໍຮອດມື້ແຮມ 13 ຄ່ຳເດືອນເກົ້າ ຊາວບ້ານຈະຫ້າງຫາກະກຽມອາຫານຫວານຄາວ ໄດ້ແກ່ຊີ້ນ, ປາ, ເຜືອກ, ມັນ, ກ້ວຍ, ອ້ອຍ, ເຂົ້າຕົ້ມ, ເຂົ້າໜົມ, ນ້ຳອ້ອຍ, ນ້ຳຕານ, ໝາກໄມ້, ໝາກພູ ແລະ ອື່ນໆ ເພື່ອຈັດລ້ຽງກັນໃນຄອບຄົວ ແລະ ເຮັດບຸນຖວາຍພະພິກຂຸສົງ ສາມະເນນ ແຕ່ສຳລັບສ່ວນທີ່ຈະອຸທິດໃຫ້ຍາດພີ່ນ້ອງທີ່ຕາຍໄປແລ້ວນັ້ນ ໃຊ້ຫໍ່ດ້ວຍໃບຕອງກ້ວຍ ຫລືຕອງຈິງ ອາຫານຫວານຫໍ່ໜຶ່ງ ອາຫານຄາວຫໍ່ໜຶ່ງ ແລະ ໝາກພູຫໍ່ໜຶ່ງ ຫລືບາງຄົນກໍເຮັດໃສ່ກະທົງ, ບາງຄົນກໍເຮັດໃສ່ເຈ້ຍໂຟມສະໂນ ແລ້ວແຕ່ສະດວກ ຫລືບາງຄົນກໍເອົາອາຫານຫວານຄາວໃສ່ໃນຫໍ່ດຽວກັນເລີຍກໍມີ ສິ່ງຂອງເຫລົ່ານີ້ຈະໜ້ອຍ ຫລືຫລາຍນັ້ນກໍແລ້ວແຕ່ສັດທາ.

ພໍຮອດເຊົ້າຂອງມື້ແຮມ 14 ຄ່ຳ ເດືອນເກົ້າ ຕອນເຊົ້າມືດ ຄື ເວລາປະມານ 4-6 ໂມງ ປະຊາຊົນຈະນຳເອົາອາຫານທີ່ຫໍ່ໄວ້ມື້ຄືນ ໄປວາງໄວ້ຕາມພື້ນດິນ ວາງແຈກໄວ້ຕາມບໍລິເວນວັດ ຕົ້ນໂພ ຫລື ຕົ້ນໄມ້ຕ້າຍວັດ ພ້ອມກັບຈູດທຽນ ແລະ ບອກກ່າວແກ່ເຜດຜີໃຫ້ມາຮັບເອົາສິ່ງຂອງ ແລະ ຜົນບຸນນັ້ນດ້ວຍ.

ບາງບ້ານ ຈະເອົາອາຫານທີ່ອຸທິດໃຫ້ແກ່ຜູ້ຕາຍຫລັງເຮັດພິທີແລ້ວກໍຝັງໄວ້ໃນດິນກໍມີ ເພື່ອບໍ່ໃຫ້ຜູ້ໃດຜູ້ໜຶ່ງໄດ້ກິນອາຫານທີ່ເປັນຂອງເຫລືອຂອງເຜດ ເພາະຢ້ານວ່າຈະກາຍເປັນເຜດໄປນຳ, ບາງບ້ານກໍມັກຈະເອົາຫໍ່ອາຫານຫລັງພິທີນັ້ນ ໄປວາງໃຫ້ຜີຕາແຮກຢູ່ນາ ບາງຄັ້ງກໍຫວ່ານລົງນ້ຳບູຊາພຣະຍານາກ ແລະ ແມ່ນ້ຳຄົງຄາ. ການວາງອາຫານໄວ້ຕາມພື້ນດິນ ຫລືຕາມບ່ອນຕ່າງໆ ເພື່ອຈະໃຫ້ພວກເຜດມາຮັບເອົາຂອງອຸທິດໃຫ້ໄດ້ງ່າຍໆ ໂດຍບໍ່ຕ້ອງມີພິທີຫຍຸ້ງຍາກຫຍັງຫລາຍ ສຳເລັດພິທີອຸທິດຜົນບຸນສົ່ງໄປໃຫ້ເຜດແລ້ວ ຊາວບ້ານກໍຈະນຳອາຫານທີ່ກຽມໄວ້ສ່ວນໜຶ່ງ ໄປຕັກບາດ ແລະ ຖວາຍທານ ແດ່ພຣະສົງສາມະເນນ ເຊິ່ງຈະມີການໄຫວ້ພະຮັບສິນ, ຖວາຍທານ, ຟັງເທດ ສະຫລອງ 1 ກັນ, ຄາຣະວະ ແລະ ຮັບພອນ ຢາດນ້ຳອຸທິດສ່ວນບຸນກຸສົນໄປຍັງເຜດຜີ ຫລື ຍາດຕິພີ່ນ້ອງ ທີ່ລ່ວງລັບໄປແລ້ວ ແລະ ແຜ່ເມດຕາໃຫ້ແດ່ສັບພະສັດທັງຫລາຍທັງປວງ... ກໍເປັນອັນສຳເລັດພິທີບຸນຫໍ່ເຂົ້າປະດັບດິນ.

---

ສາລາກະວີ

## ແມ່ນຳພາສູ່ຝັນ

# ໂດຍ: ຝັນຮ່ວງ

❊ ແມ່ພະລັນຫອບຫິ້ວ    ລິ້ວແລ່ນຫົວຊົນ
ລະເບີດ ຕີຕາມຕິດ    ແຕກຫລັງທັງໜ້າ
ບາງຄົນ ໂງເງລົ້ມ    ຈົມທາງຫລັງເທັ້ງທ່າວ
ຫລາຍຄົນ ຟຸບຕໍ່ໜ້າ    ຖະຫລາກິ້ງເກື່ອນກອງ

❊ ຍາມເມື່ອຮຽນໝຸ່ມນ້ອຍ    ຄະນາອ່ອນດຽງສາ
ຫໍ່ຜ້າອົບພະຍົບໜີ    ຜ່າຝົນແສນສະອື້ນ
ແມ່ນຳພາປະຊັນສູ້    ຕາມທາງຝັນສາຍໃໝ່
ເດັກນ້ອຍ ເຮຮ່ຳໄຫ້    ລະເບີດດັງຕຶ້ງຕ້າງ
    ປືນມ້າງປ່າເຖືອນຍິງ ນີ້ນາ!

❊ ທາງຍ່າງ ເດຍລະດາດດ້ວຍ    ຊຸມລະເບີດຊຸມໂບມ
ເລືອດຍ່າວຍົມລົນໄຫລ    ອາບນະທີທານນ້ຳ
ປຸນປຽບ ຟອງທະເລຄື້ນ    ໃນໃຈແມ່ຂົມຂື່ນ
ສຸດລະທຶບສິ່ງສະອື້ນ    ກະສັນຊ້ຳຮັກແມ່ຮຽນ ເດນໍ!

❊ ແມ່ຍັງ ຫັນຮຶດສູ້    ປະຊັນຊ່ວງກະແສລົມ
ເຫງົ້າໂງ່ນ ພູຜາຊັນ    ກໍດຸ່ງດັນໄປໄດ້
ເຫລືອໃຈ ມອງພູໂລ້ນ    ເພາະຝັນເຫລືອງໂຮຍຮ່ຳ
ໃນຂຸມໂບມກອດລູກໄວ້    ອາໄລບ້ານພໍ່ແມ່ຫລັງ

❊ ປິດໝວກ ເປື້ອນກິ່ນໝີ້    ຖະໜອມລູກຫອມຮັກ
ນ້ຳຕາ ຕອມຕາມຕົກ    ເບິ່ງລູກຍັງແຜງຍິ້ມ
ລະເບີດ ເທຖະໜັດຕຶ້ງ    ພະລັງແຮງຍັງແຕກ
ປືນໃຫຍ່ ລົວລັ່ນກ້ອງ    ຄະນອງເລື້ອຍບໍ່ທ່ອນເຊົາ ນີ້ນໍ!

**ບົດກະວີຈາກ ສສ.ຫວຽດນາມ**

ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022)

---



ສຸກສະບາຍຫາຍໂຣຄາ

# ທ່ານອນຜິດໆ ທີ່ທ່ານອາດຍັງບໍ່ຮູ້

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

ການນອນເປັນການພັກຜ່ອນທີ່ດີທີ່ສຸດ ແລະ ງ່າຍທີ່ສຸດ ເປັນຊ່ວງເວລາທີ່ດີທີ່ສຸດຂອງຮ່າງກາຍທີ່ຈະໄດ້ສ້ອມແຊມໂຕເອງ ການນອນທີ່ເໝາະສົມໂດຍສະເລ່ຍແລ້ວແມ່ນ 7-8 ຊົ່ວໂມງຕໍ່ມື້ ເທົ່າກັບເຮົາໃຊ້ເວລາໃນການນອນ ¼ ໃນແຕ່ລະມື້ ດັ່ງນັ້ນ, ການນອນທີ່ຖືກຕ້ອງ ແລະ ເໝາະສົມ ຈຶ່ງມີຄວາມສຳຄັນເປັນຢ່າງຍິ່ງ ເພາະຈະເຮັດໃຫ້ມີສຸຂະພາບດີຂຶ້ນ ບໍ່ມີອາການເຈັບຂອງກະດູກ, ກ້າມຊີ້ນ ຫລື ລະບົບປະສາດ ໃນສ່ວນຕ່າງໆຂອງລະບົບຮ່າງກາຍກ່ອນໄວອັນຄວນ ແຕ່ບາງທ່ານອາດຈະສົງໄສວ່າເປັນຫຍັງຍິ່ງນອນຍິ່ງເມື່ອຍ ນັ້ນອາດເປັນເພາະເຮົານອນຜິດທ່າ ຫລື ນອນໃນທ່າທີ່ບໍ່ຖືກຕ້ອງ ລວມເຖິງບ່ອນນອນທີ່ບໍ່ເໝາະສົມກັບການພັກຜ່ອນ ສະນັ້ນ, ໃນສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີ 4 ທ່ານອນທີ່ກໍ່ໃຫ້ເກີດບັນຫາຕໍ່ສຸຂະພາບຂອງທ່ານມານຳສະເໜີໃຫ້ແກ່ທ່ານໄດ້ຮັບຮູ້ນຳກັນ.

**ທ່າທີ 1: ການນອນຂົດລິ່ນ**

ເປັນທ່ານອນທີ່ບໍ່ເໝາະສົມທີ່ສຸດ ເພາະຈະສົ່ງຜົນເສຍຕໍ່ຮ່າງກາຍໃນຫລາຍໆດ້ານ ເຊິ່ງຈະກໍ່ໃຫ້ເກີດຜົນເສຍ ດັ່ງນີ້:

- ປວດຫົວເຂົ່າ, ເອັນບໍລິເວນຫົວເຂົ່າ ແລະ ສະໂພກເກີດການອັກເສບ ເນື່ອງຈາກມີການພັບງໍເຂົ່າເປັນເວລາດົນ;
- ກ້າມຊີ້ນຫລັງເບື້ອງລຸ່ມອັກເສບ ແລະ ເຈັບ ເນື່ອງຈາກມີການຂົດງໍຂອງຫລັງ ເຮັດໃຫ້ກ້າມເນື້ອຖືກຢຽດອອກຈົນຕຶງ;
- ກະດູກສັນຫລັງມີການບິດງໍຜິດຮູບ;
- ປວດກ້ານຄໍຈາກກ້າມເນື້ອອັກເສບ ເນື່ອງຈາກການກົ້ມຫົວເປັນເວລາດົນເຮັດໃຫ້ກ້າມຊີ້ນຄໍຕຶງ ແລະ ຍັງໄປເພີ່ມແຮງກົດທັບຕໍ່ໝອນຮອງກະດູກສ່ວນຫລັງບ່ອນຄໍຕື່ມອີກ;

**ທ່າທີ 2: ນອນຂວ້ຳ**

ທ່ານີ້ ຈະເຮັດໃຫ້ຫາຍໃຈລຳບາກ, ກະດູກສັນຫລັງແອ່ນຫລາຍກວ່າປົກກະຕິ ແລະ ໃນຕອນທີ່ນອນ ກໍຕ້ອງມີການບິດຄໍໄປດ້ານຊ້າຍ ຫລື ຂວາ ລວມເຖິງການແອນໄປທາງຫລັງອີກດ້ວຍ ຈຶ່ງອາດຈະພາໃຫ້ເກີດການອັກເສບຂອງກ້າມເນື້ອບໍລິເວນຄໍ ພາໃຫ້ເກີດອາການປວດຄໍ ແລະ ຫລັງໄດ້.

**ທ່າທີ 3: ການນອນແບບເຄິ່ງນັ່ງເຄິ່ງນອນ**

ທ່ານອນເຄິ່ງນັ່ງເຄິ່ງນອນ ໂດຍມີໝອນຮອງຫລັງ ແລ້ວນອນເອນຫລັງ ແລະ ເລື່ອລົງເທິງຕຽງ ຫລື ໂຊຟາ ພ້ອມກັບການຫລິ້ນໂທລະສັບມືຖື, ອ່ານໜັງສື ຫລື ເບິ່ງໂທລະທັດໄປເລື້ອຍໆ ເຮັດໃຫ້ຜູ້ທີ່ນອນທ່ານີ້ຕ້ອງງໍ ຫລື ງ່ຽງຄໍເປັນເວລາດົນ ເຊິ່ງຖ້າເຮັດເປັນປະຈຳ ຈະເຮັດໃຫ້ໝອນຮອງກະດູກສັນຫລັງສ່ວນຄໍ ແລະ ແຜ່ນຫລັງເຮັດວຽກຫລາຍກວ່າປົກກະຕິ ອັນສົ່ງຜົນໃຫ້ເກີດການອັກເສບ ແລະ ເຈັບຢູ່ໃນກ້າມຊີ້ນຄໍ ແລະ ບ່າພ້ອມນັ້ນ, ຍັງເຮັດໃຫ້ເກີດອາການເຈັບຫລັງນຳອີກ.

**ທ່າທີ 4: ນອນທັບແຂນໂຕເອງ**

ການກົດທັບແຂນເປັນເວລາດົນ ເຊິ່ງເປັນບໍລິເວນທີ່ມີເສັ້ນປະສາດຫລາຍ ການນອນເຕັງ ຫລື ການພາດແຂນເທິງຕັ້ງເປັນເວລາດົນ ຈະກໍໃຫ້ເກີດອາການທາງລະບົບປະສາດ ທີ່ພົບເຫັນຫລາຍທີ່ສຸດຄື ອາການຂໍ້ມືຕົກ ແລະ ຍົກມືບໍ່ຂຶ້ນ.

**www.thairath.co.th**



# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການຊົມໃຊ້ຢາສູບ ໝາຍເຖິງ ການສູບ, ຄ້ຽວ, ອົມ, ດົມ, ດູດ, ກິນ, ສູດ, ຖູນ, ທາ, ຣົມ ຫຼື ພົ່ນເຂົ້າໄປໃນຮ່າງກາຍ ໂດຍຜ່ານປາກ ຫຼື ດັງ ຫຼື ວິທີການອື່ນ ທີ່ພາໃຫ້ເກີດຄວັນ ຫຼື ບໍ່ເກີດຄວັນ;

2. ຄວັນຢາສູບມືສອງ ໝາຍເຖິງ ຄວັນຢາສູບທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;

3. ການໄດ້ຮັບຄວັນຢາສູບມືສອງ ໝາຍເຖິງ ຜູ້ບໍ່ສູບຢາ ໄດ້ຮັບຄວັນທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;

4. ຜະລິດຕະພັນຢາສູບຮຽນແບບ ໝາຍເຖິງ ຜະລິດຕະພັນຄ້າຍຄືຜະລິດຕະພັນຢາສູບ;

5. ເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ ໝາຍເຖິງ ເຄື່ອງຈັກຂາຍຜະລິດຕະພັນຢາສູບ ທີ່ຜູ້ຊົມໃຊ້ ສາມາດຊື້ໄດ້ ດ້ວຍການນຳໃຊ້ເງິນສົດ, ຢອດຫຼຽນ ຫຼື ບັດສະເພາະ;

6. ຜູ້ປະກອບການ ໝາຍເຖິງ ຜູ້ຜະລິດ, ນຳເຂົ້າ, ສົ່ງອອກ, ຂາຍຍົກ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;

7. ຢາສູບນອກລະບົບ ໝາຍເຖິງ ຜະລິດຕະພັນຢາສູບທີ່ລັດບໍ່ເກືອດຫ້າມ ແຕ່ມີການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້-ຂາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

8. ຢາສູບເຖື່ອນ ໝາຍເຖິງ ຜະລິດຕະພັນຢາສູບແບບອຸດສາຫະກຳ ແລະ ຫັດຖະກຳ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ;

9. ການອຸປະຖຳຈາກອຸດສາຫະກຳຢາສູບ ໝາຍເຖິງ ການປະກອບສ່ວນທຸກປະເພດ ໂດຍທາງກົງ ຫຼື ທາງອ້ອມ ຜ່ານກິດຈະກຳ ຫຼື ວິທີການໃດໜຶ່ງ ເປັນຕົ້ນ ການອຸປະຖຳການສຶກສາ, ກິລາ, ສິລະປະ, ວັນນະ ຄະດີ, ອຸປະກອນການແພດ, ຄົ້ນຄວ້າ, ວິໄຈ, ປູກຝັງ, ລ້ຽງສັດ, ກິດຈະກຳທາງສັງຄົມ ເພື່ອຈູງໃຈ ຫຼື ສົ່ງເສີມການຂາຍ ແລະ ການຊົມໃຊ້ຜະລິດຕະພັນຢາສູບ;

10. ການໂຄສະນາຜະລິດຕະພັນຢາສູບ ໝາຍເຖິງ ການນຳສະເໜີດ້ວຍວິທີການໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມ ເພື່ອຈຸດປະສົງ ຊຸກຍູ້, ຈູງໃຈ, ສົ່ງເສີມ ໃຫ້ຊື້ ຫຼື ຊົມໃຊ້ຜະລິດຕະພັນຢາສູບ ໂດຍຜ່ານບຸກຄົນ, ສື່ສິ່ງພິມ, ໂທລະພາບ, ວິທະຍຸ, ຮູບເງົາ, ການສື່ສານດ້ານເອເລັກໂຕຣນິກ, ສື່ສັງຄົມອອນລາຍ, ວີດີໂອ, ໂທລະສັບ, ການຕິດປ້າຍ, ກະດານຂ່າວ, ການວາງສະແດງຮູບພາບ ຫຼື ຕົວແບບ, ການວາງຜະລິດຕະພັນຢາສູບ ຢູ່ຈຸດຂາຍ, ກິດຈະກຳທາງສັງຄົມ ແລະ ວິທີການອື່ນ;

11. ພາຍໃນອາຄານ ໝາຍເຖິງ ສະຖານທີ່ ທີ່ມຸງດ້ວຍຫຼັງຄາ, ແອ້ມດ້ວຍຝາ ຫຼື ບໍ່ມີຝາຖາວອນ ຫຼື ຊົ່ວຄາວ ລວມທັງລະບຽງ, ລິຟ, ຂັ້ນໄດ, ບ່ອນຮັບແຂກ, ອາຄານຕໍ່ເຕີມ, ຫ້ອງອາຫານ, ຫ້ອງນ້ຳ, ຫ້ອງນັ່ງຫຼິ້ນ, ເທີບ, ຕູບ ແລະ ອື່ນໆ;

12. ການຈົດແຈ້ງເອກະສານກ່ຽວກັບການນຳເຂົ້າ ໝາຍເຖິງ ການແຈ້ງຈຳນວນຜະລິດຕະພັນຢາສູບທີ່ຈະນຳເຂົ້າພ້ອມດ້ວຍຕົວຢ່າງ, ສ່ວນປະກອບ, ສ່ວນປະສົມຂອງແຕ່ລະຍີ່ຫໍ້ ແລະ ສານທີ່ເກີດຈາກການເຜົາໄໝ້.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຄວບຄຸມຢາສູບ**

ລັດ ສົ່ງເສີມວຽກງານຄວບຄຸມຢາສູບ ດ້ວຍການສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ວັດຖູປະກອນ ໃຫ້ແກ່ການເຄື່ອນໄຫວວຽກງານຄວບຄຸມຢາສູບ.

ລັດ ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ວຽກງານຄວບຄຸມຢາສູບ ດ້ວຍການວາງນະໂຍບາຍ, ມາດຕະການຕ່າງໆ ເປັນຕົ້ນ ການເພີ່ມອາກອນ ແລະ ລາຄາ, ການພິມຄຳເຕືອນສຸຂະພາບ, ການຫ້າມໂຄສະນາ ຜະລິດຕະພັນຢາສູບ, ການກຳນົດສະຖານທີ່ຫ້າມສູບຢາ, ຈຳໜ່າຍ, ຊື້ ຂາຍ ຢາສູບ ລວມທັງ ບໍ່ສົ່ງເສີມໃນການສ້າງຕັ້ງໂຮງງານ ແລະ ບໍລິສັດຢາສູບຂຶ້ນໃໝ່.

ລັດ ເອົາໃຈໃສ່ ໂຄສະນາ, ສຶກສາອົບຮົມ ໃຫ້ທົ່ວສັງຄົມ ດ້ວຍຫຼາຍຮູບການ ເພື່ອສ້າງຈິດສຳນຶກໃຫ້ເຫັນໄດ້ຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ດ້ວຍການສະໜອງຂໍ້ມູນ ຂ່າວສານ ທີ່ຖືກຕ້ອງຕາມຫຼັກການທາງດ້ານວິທະຍາສາດ ແລະ ຊຸກຍູ້ ສົ່ງເສີມ ບຸກຄົນ, ຄອບຄົວ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນໃຫ້ເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນການຄວບຄຸມຢາສູບ ລວມທັງ ສົ່ງເສີມໃຫ້ຊາວກະສິກອນປູກພືດເສດຖະກິດຊະນິດອື່ນທົດແທນການປູກຢາສູບ.

ລັດ ປົກປ້ອງນະໂຍບາຍທາງດ້ານສຸຂະພາບຈາກການແຊກແຊງ ຂອງອຸດສາຫະກຳຢາສູບໃນທຸກຮູບແບບ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຄວບຄຸມຢາສູບ**

ວຽກງານຄວບຄຸມຢາສູບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ທີ່ ສປປລາວ ເປັນພາຄີ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

3. ຮັບປະກັນການປະຕິບັດຕາມການກຳນົດສະຖານທີ່ຫ້າມ ແລະ ອະນຸຍາດໃຫ້ສູບຢາ ຢ່າງເຂັ້ມງວດ;

4. ຮັບປະກັນໃຫ້ພົນລະເມືອງທຸກຄົນ ດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ປອດຄວັນຢາ ສູບ, ສາມາດເຂົ້າເຖິງການບໍລິການບຳບັດອອກຢາສູບ ແລະ ປິ່ນປົວເມື່ອໄດ້ຮັບຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ;

5. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;

6. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄວບຄຸມຢາສູບ.

**ມາດຕາ 6 (ປັບປຸງ) ພັນທະກ່ຽວກັບວຽກງານຄວບຄຸມຢາສູບ**

ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປລາວ ມີພັນທະປະກອບສ່ວນເຂົ້າໃນວຽກງານຄວບຄຸມຢາສູບ ດ້ວຍການເປັນແບບຢ່າງໃນການປະຕິບັດກົດໝາຍ ແລະ ລະ ບຽບການ ກ່ຽວກັບການຄວບຄຸມຢາສູບ, ເປັນເຈົ້າການສຶກສາອົບຮົມ, ແນະນຳຜູ້ຢູ່ໃກ້ຄຽງ ຫຼື ຢູ່ໃນການຄຸ້ມຄອງຂອງຕົນໃຫ້ເຫັນໄດ້ຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄວບຄຸມຢາສູບ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວສານ, ການຄົ້ນຄວ້າ ວິທະຍາສາດ, ເຕັກນິກວິຊາການ, ເຕັກໂນໂລຊີ, ການສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ທີ່ ສປປລາວ ເປັນພາຄີ.

## ພາກທີ II
## ປະເພດ, ຊະນິດ ຜະລິດຕະພັນຢາສູບ ແລະ ຜົນຮ້າຍຂອງຢາສູບ

### ໝວດທີ 1
### ປະເພດ ແລະ ຊະນິດ ຜະລິດຕະພັນຢາສູບ

**ມາດຕາ 9 ປະເພດຜະລິດຕະພັນຢາສູບ**

ຜະລິດຕະພັນຢາສູບ ມີ ສອງປະເພດ ດັ່ງນີ້:

1. ຜະລິດຕະພັນຢາສູບແບບອຸດສາຫະກຳ;

2. ຜະລິດຕະພັນຢາສູບແບບຫັດຖະກຳ.

**ມາດຕາ 10 ຜະລິດຕະພັນຢາສູບແບບອຸດສາຫະກຳ**

ຜະລິດຕະພັນຢາສູບແບບອຸດສາຫະກຳ ແມ່ນ ຜະລິດຕະພັນຢາສູບທີ່ຜະລິດ ດ້ວຍເຄື່ອງຈັກໃນໂຮງງານ ຊຶ່ງສາມາດຜະລິດໄດ້ເປັນຈຳນວນຫຼວງຫຼາຍ.

**ມາດຕາ 11 (ປັບປຸງ) ຜະລິດຕະພັນຢາສູບແບບຫັດຖະກຳ**

ຜະລິດຕະພັນຢາສູບແບບຫັດຖະກຳ ແມ່ນ ຜະລິດຕະພັນຢາສູບ ທີ່ຜະລິດດ້ວຍມື ຫຼື ການນຳໃຊ້ເຄື່ອງມືແບບປະຖົມປະຖານ ເພື່ອຜົນປະໂຫຍດທາງດ້ານການຄ້າ.

**ມາດຕາ 12 (ປັບປຸງ) ຊະນິດຜະລິດຕະພັນຢາສູບ**

ຜະລິດຕະພັນຢາສູບ ມີຫຼາຍຊະນິດ ເຊັ່ນ ຢາເສັ້ນ, ຢາຊອງ, ຢາຊິກາ, ຢາສູບໄຟຟ້າ ລວມທັງຢາສູບແບບອາຍລະເຫີຍ, ຊີຊາ ຫຼື ບາຣາກູ ແລະ ຢາສູບຊະນິດອື່ນ.

### ໝວດທີ 2
### ຜົນຮ້າຍຂອງຢາສູບ

**ມາດຕາ 13 (ປັບປຸງ) ຜົນຮ້າຍຕໍ່ສຸຂະພາບ**

ການຊົມໃຊ້ຢາສູບ ມີຜົນຮ້າຍຕໍ່ສຸຂະພາບຂອງຜູ້ຊົມໃຊ້ຢາສູບ ແລະ ຜູ້ໄດ້ຮັບຄວັນຢາສູບມືສອງ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຊຶ່ງມີຄວາມສ່ຽງໃນການເປັນພະຍາດຮ້າຍແຮງ ເຊັ່ນ ພະຍາດ ມະເຮັງປອດ, ຫົວໃຈ-ເສັ້ນເລືອດ, ເສັ້ນເລືອດໃນສະໝອງຕີບ, ຕັນ, ແຕກ, ລະບົບຫາຍໃຈຊຳເຮື້ອ, ລະບົບລະລາຍ, ລະບົບປະສາດ, ເບົາຫວານ, ຄວາມດັນເລືອດສູງ ແລະ ພະຍາດອື່ນ ຊຶ່ງນຳໄປສູ່ການເປັນພິການຂອງອະໄວຍະວະໃດໜຶ່ງ ແລະ ການເສຍຊີວິດກ່ອນໄວອັນຄວນ.

**ມາດຕາ 14 ຜົນກະທົບຕໍ່ຄອບຄົວ**

ການຊົມໃຊ້ຢາສູບ ມີຜົນກະທົບທາງລົບຕໍ່ສະມາຊິກຂອງຄອບຄົວ ເປັນຕົ້ນ ແມ່ຍິງ, ເດັກນ້ອຍ. ຄອບຄົວ ຍັງຕ້ອງໄດ້ຈ່າຍເງິນເຂົ້າໃນການຊື້ຢາສູບ ແລະ ປິ່ນປົວພະຍາດທີ່ເກີດຂຶ້ນ ຊຶ່ງເປັນການເພີ່ມພາລະແບກຫາບຂອງຄອບຄົວ.

**ມາດຕາ 15 (ປັບປຸງ) ຜົນກະທົບຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ**

ການຊົມໃຊ້ຢາສູບ ເປັນການທຳລາຍສຸຂະພາບຂອງຜູ້ອອກແຮງງານ, ຜູ້ຜະລິດ ທັງເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ຊຶ່ງເປັນຜົນກະທົບທາງລົບຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ເປັນການທຳລາຍສິ່ງແວດລ້ອມ.

## ພາກທີ III
## ການຄວບຄຸມຜະລິດຕະພັນຢາສູບ

### ໝວດທີ 1
### ການຄວບຄຸມ ການຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ

**ມາດຕາ 16 (ປັບປຸງ) ການຄວບຄຸມການຜະລິດ**

ການຜະລິດຢາສູບແບບອຸດສາຫະກຳ ແລະ ຫັດຖະກຳ ຢູ່ ສປປລາວ ຕ້ອງຢູ່ພາຍໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດ ແລະ ປະຕິບັດ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານຄວບຄຸມຢາສູບ ເປັນຕົ້ນ ມາດຕະຖານການຜະລິດ, ວັນ, ເດືອນ, ປີຜະລິດ, ຕິດສະແຕມອາກອນ, ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ.

**ມາດຕາ 17 (ປັບປຸງ) ການຄວບຄຸມການ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ**

ການນຳເຂົ້າຜະລິດຕະພັນຢາສູບ ເພື່ອຈຳໜ່າຍ, ຊື້-ຂາຍ ໃນ ສປປລາວ ຕ້ອງຢູ່ພາຍໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດຂອງຂະແໜງການສາທາລະນະສຸກ, ຂະແໜງການອຸດສາ ຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຊັ່ນ ການອະນຸຍາດ, ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ ແລະ ຕິດສະແຕມພາສີ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການສົ່ງອອກຜະລິດຕະພັນຢາສູບ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ປະຕິບັດຕາມເງື່ອນໄຂຂອງປະເທດ ຜູ້ນຳເຂົ້າ.

ການສົ່ງຜະລິດຕະພັນຢາສູບ ຜ່ານ ສປປລາວ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງຂອງ ສປປລາວ ແລະ ຕ້ອງແຈ້ງເອກະສານກ່ຽວກັບການສົ່ງຜ່ານນັ້ນ ໃຫ້ຂະແໜງການສາທາລະນະສຸກ.

ສຳລັບຜະລິດຕະພັນຢາສູບທີ່ນຳເຂົ້າ ເພື່ອຈຳໜ່າຍ, ຊື້-ຂາຍ ຢູ່ຮ້ານຄ້າປອດພາສີ ຕ້ອງມີຄຳເຕືອນສຸຂະພາບ ແລະ ສະຫຼາກ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 (ປັບປຸງ) ການຄວບຄຸມການ ຈຳໜ່າຍ ແລະ ຊື້ ຂາຍ**

ຜະລິດຕະພັນຢາສູບ ທີ່ຈຳໜ່າຍ ແລະ ຊື້-ຂາຍ ໃນ ສປປລາວ ຕ້ອງມີຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ, ຕິດສະແຕມອາກອນ ແລະ/ຫຼື ສະແຕມພາສີ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ ໃນ ສປປລາວ ລວມທັງຂາຍຍົກ ແລະ ຂາຍຍ່ອຍ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍປະສານສົມທົບກັບຂະແໜງ ການສາທາລະນະສຸກ.

### ໝວດທີ 2
### ພັນທະຂອງຜູ້ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ຊື້ ຂາຍ ແລະ ຜູ້ຊົມໃຊ້ ຜະລິດຕະພັນຢາສູບ

**ມາດຕາ 19 (ປັບປຸງ) ພັນທະຂອງຜູ້ຜະລິດ**

ຜູ້ຜະລິດ ຜະລິດຕະພັນຢາສູບ ຢູ່ ສປປ ລາວ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;

2. ພິມຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ ແລະ ຕິດສະແຕມອາກອນ ໃສ່ຊອງ, ຕຸດ, ຫີບ ຜະລິດຕະພັນຢາສູບ;

3. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບສ່ວນປະກອບ, ສ່ວນປະສົມ, ຈຳນວນ ຜະລິດຕະພັນຢາສູບຂອງແຕ່ລະຍີ່ຫໍ້, ການຕະຫຼາດຢາສູບ, ຄ່າໃຊ້ຈ່າຍໃນການຕະຫຼາດຢາສູບ ແລະ ສານທີ່ເກີດຈາກການເຜົາໄໝ້ ພ້ອມດ້ວຍຕົວຢ່າງໃຫ້ຂະແໜງການສາທາລະນະສຸກ ສອງຄັ້ງຕໍ່ປີ ເພື່ອດຳເນີນການກວດສອບ ແລະ ເປີດເຜີຍຕໍ່ປະຊາຊົນ;

4. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບໂຄງສ້າງຕົ້ນທຶນຂອງການຜະລິດຢາສູບ ແລະ ລາຍຮັບ ປະຈຳປີ ໃຫ້ຂະແໜງການການເງິນ ແລະ ຂະແໜງການອຸດສາຫະກຳ ແລະ ການຄ້າ;

5. ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

6. ດຳເນີນທຸລະກິດຜະລິດຕະພັນຢາສູບ ຢ່າງໂປ່ງໃສ ແລະ ສາມາດກວດສອບໄດ້;

7. ປົກປັກຮັກສາສິ່ງແວດລ້ອມໃນຂອບເຂດພື້ນທີ່ການຜະລິດຂອງຕົນ;

8. ປ້ອງກັນ ແລະ ສົ່ງເສີມສຸຂະພາບຂອງຜູ້ອອກແຮງງານໃນຂະບວນ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

23. ຄຳສັ່ງຂອງສານ ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດຊັບ ຫລື ອາຍັດຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງຈັບຕົວ ແລະ ອື່ນໆ;

24. ຄຳຊີ້ຂາດຂອງສານ ໝາຍເຖິງ ຕົກລົງປະເພດໜຶ່ງຂອງສານກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ຄຳຕັດສິນປະຫານຊີວິດ ແລະ ອື່ນໆ;

# ກອງປະຊຸມອະນາໄມ ແລະ ເສດຖະກິດລະດັບສູງ ຂອງອົງການຮ່ວມມືເສດຖະກິດອາຊີປາຊີຟິກ

ແປ ແລະ ຮຽບຮຽງ: ທະນາພອນ




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນລະຫວ່າງວັນທີ 25-26 ສິງຫານີ້, ກອງປະຊຸມອະນາໄມ ແລະ ເສດຖະກິດລະດັບສູງຂອງອົງການຮ່ວມມືເສດຖະກິດອາຊີປາຊີຟິກ ຫລື ອາເປັກ ຄັ້ງທີ 12 ໄດ້ຈັດຂຶ້ນຢູ່ນະຄອນຫລວງບາງກອກ ປະເທດໄທ. ກອງປະຊຸມຈັດຂຶ້ນໂດຍກະຊວງສາທາລະນະສຸກໄທ ເຊິ່ງມີລັດຖະມົນຕີກະຊວງສາທາລະນະສຸກ ແລະ ເຈົ້າໜ້າທີ່ລະດັບສູງອື່ນໆຂອງກຸ່ມເສດຖະກິດໃນອາເປັກໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຜ່ານທາງອອນລາຍ ແລະ ອັອບລາຍ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍໃຕ້ຫົວຂໍ້ວ່າ "ເປີດປະຕູ, ເຊື່ອມຈອດກັນ ແລະ ກໍ້າເກິ່ງກັນ".

ໃນໂອກາດນີ້, ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນບົດຮຽນກ່ຽວກັບການປົກປັກຮັກສາຄວາມກໍ້າເກິ່ງກັນ ລະຫວ່າງການຕ້ານພະຍາດໂຄວິດ-19 ແລະ ການພັດທະນາເສດຖະກິດ ພາຍໃຕ້ສະພາບພະຍາດໂຄວິດ-19 ແຜ່ລະບາດ.

ກອງເລຂາອົງການອາເປັກສະເໜີໃຫ້ຊຸກຍູ້ເສດຖະກິດຟື້ນຕົວຄືນພາຍໃຕ້ເງື່ອນໄຂຮັບປະກັນສຸຂະພາບ, ເຊິ່ງລວມທັງຊຸກຍູ້ຄວາມສະດວກດ້ານການຄ້າ ເພື່ອເຮັດໃຫ້ບັນດາປະເທດສາມາດໄດ້ຮັບວັກຊີນ ແລະ ອຸປະກອນການປິ່ນປົວ, ສ້າງຊ່ອງທາງສຸຂະພາບ ແລະ ຄວາມປອດໄພລະຫວ່າງປະເທດ ແລະ ເຂດແຄວ້ນ ເພື່ອບັນລຸການທ່ອງທ່ຽວຂ້າມຊາດ ທັງຫລຸດຜ່ອນຄວາມສ່ຽງທີ່ມີຕໍ່ເສດຖະກິດໃຫ້ລົງເຖິງຂັ້ນຕໍ່າສຸດ.

ແຫລ່ງຂ່າວ: cri



# ຈີນ ອອກມາດຕະການ ຊຸກຍູ້ເສດຖະກິດ 1 ພັນຕື້ຢວນ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ອີງຕາມການລາຍງານຂ່າວເມື່ອວັນທີ 25 ສິງຫາ 2022 ໃຫ້ຮູ້ວ່າ: ລັດຖະບານຈີນ ໄດ້ປະກາດແຜນການກະຕຸກຊຸກຍູ້ເສດຖະກິດ 1 ພັນຕື້ຢວນ (146 ຕື້ໂດລາສະຫະລັດ) ແນໃສ່ຟື້ນຟູເສດຖະກິດ ລວມທັງການຫລຸດຜ່ອນຜົນກະທົບຈາກການໃຊ້ມາດຕະການປິດເມືອງເພື່ອຄວບຄຸມພະຍາດໂຄວິດ-19 ແລະ ການອ່ອນໂຕຂອງຕະຫລາດອະສັງຫາລິມະສັບ.

ມາດຕະການຊຸກຍູ້ເສດຖະກິດ ເຊິ່ງຄະນະລັດຖະບານຈີນໄດ້ອອກຖະແຫລງການຫລ້າສຸດນີ້ ແມ່ນລວມມີການຈັດສັນ 300 ຕື້ໂດລາໃຫ້ແກ່ທະນາຄານນະໂຍບາຍຂອງລັດ ເພື່ອອະນຸຍາດໃຫ້ທະນາຄານເຫລົ່ານີ້ ໄປລົງທຶນໃນໂຄງການພື້ນຖານໂຄງລ່າງ ແລະ ຈັດສັນເງິນ 500 ຕື້ຢວນໃຫ້ລັດຖະບານທ້ອງຖິ່ນສຳລັບການອອກພັນທະບັດພິເສດ.

ລາຍງານຍັງໃຫ້ຮູ້ວ່າ: ສະພາປະຊາຊົນແຫ່ງຊາດຈີນ ໄດ້ໃຫ້ຄຳໝັ້ນສັນຍາວ່າຈະນຳໃຊ້ທຸກເຄື່ອງມືທີ່ມີຢູ່ເພື່ອຮັກສາຂອບເຂດນະໂຍບາຍໃຫ້ຖືກຕ້ອງ. ທັງນີ້, ການທີ່ຈີນສືບຕໍ່ໃຊ້ມາດຕະການປິດເມືອງເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການອ່ອນໂຕຂອງຕະຫລາດອະສັງຫາລິມະສັບໃນໄລຍະປີທີ່ຜ່ານມາ ໄດ້ສົ່ງຜົນໃຫ້ເສດຖະກິດຈີນຂະຫຍາຍໂຕຊ້າລົງ ແລະ ອາດສາມາດເຮັດໃຫ້ລັດຖະບານຈີນບໍ່ໄດ້ຕາມເປົ້າໝາຍທີ່ຈະຊຸກຍູ້ເສດຖະກິດໃຫ້ເປັນ 5,5% ໃນປີນີ້.

ແນວໃດຕາມ, ອຳນາດການປົກຄອງຈີນ ຍັງຍຶດໝັ້ນນະໂຍບາຍໂຄວິດເປັນສູນຢູ່.

ແຫລ່ງຂ່າວ: InfoQuest





## ຮອງປະທານ...

ປາສັກ ເຊິ່ງໃນຄະນະປະກອບມີທ່ານ ໄຊບັນດິດ ຣາຊະພົນ ແລະ ທ່ານ ນາງ ບູນມີ ຈຸນລະຈັກ ສສຊ ປະຈຳເຂດເລືອກຕັ້ງ ສົມທົບກັບບັນດາສະມາຊິກສະພາປະຊາຊົນແຂວງ ເຊິ່ງໄດ້ເຄື່ອນໄຫວຢູ່ 6 ຈຸດ ຄື: ບ້ານກົ່ງຕູນ, ບ້ານເສັດຄິດ, ຫ້ອງວ່າການເມືອງປາກຊ່ອງ, ໂຮງຮຽນຕຳຫລວດເລກ 4, ມະຫາວິທະຍາໄລຈຳປາສັກ ແລະ ຫ້ອງວ່າການນະຄອນປາກເຊ.

ຈຸດປະສົງ ເພື່ອພົບປະຢ້ຽມຢາມ ແລະ ຊຸກຍູ້ວຽກງານຕ່າງໆ ໂດຍຕິດພັນກັບການນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ເຜີຍແຜ່ໃຫ້ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫລວດ ໄດ້ຮັບຮູ້ເຊື່ອມຊຶມ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາຫລາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ເປັນຕົ້ນກອງປະຊຸມໄດ້ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ແຜນງົບປະມານແຫ່ງລັດ, ການສັບຊ້ອນກົງຈັກຂອງລັດຖະບານ ແລະ ໄດ້ຮັບຮອງເອົາຮອງນາຍົກລັດຖະມົນຕີແຫ່ງ ສປປລາວ ເພີ່ມອີກ 2 ທ່ານ ຄື: ທ່ານ ວິໄລ ຫລ້າຄຳຟອງ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ທ່ານ ສະເຫລີມໄຊ ກົມມະສິດ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດ, ພ້ອມທັງໄດ້ຮັບຮອງເອົາທ່ານ ວຽງທະວີສອນ ເທບພະຈັນ ເປັນປະທານອົງການກວດສອບແຫ່ງລັດ, ທ່ານ ມະໄລທອງ ກົມມະສິດ ເປັນລັດຖະມົນຕີກະຊວງອຸດສະຫະກຳ ແລະ ການຄ້າ, ການສ້າງ ແລະ ປັບປຸງກົດໝາຍ ແລະ ບັນຫາອື່ນໆ ອີກຈຳນວນໜຶ່ງ.

ໃນການລົງເຄື່ອນໄຫວຄັ້ງນີ້, ຄະນະ ໄດ້ນຳເງິນສົດ ແລະ ເອົາເຄື່ອງອຸປະກອນຈຳນວນໜຶ່ງ ເຊັ່ນ: ເຄື່ອງນຸ່ງຫົ່ມ, ຜ້າຫົ່ມ, ປຶ້ມຂຽນ ແລະ ສິ່ງຂອງຊ່ວຍເຫລືອອື່ນໆ ລວມເປັນມູນຄ່າ 92 ລ້ານກວ່າກີບ ມອບໃຫ້ພໍ່ແມ່ປະຊາຊົນ ແລະ ສະຖາບັນການສຶກສາ.

## ປະທານ...

ປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງ ຊຸດທີ II ຢູ່ 3 ບ້ານຄື: ໂພນເຄັງ, ທາດຫລວງເໜືອ ແລະ ວຽງຈະເລີນ ທີ່ສະໂມສອນຫ້ອງການບ້ານວຽງຈະເລີນ ໂດຍມີອຳນາດການປົກຄອງເມືອງໄຊເສດຖາ, ຄະນະບ້ານ ແລະ ພໍ່ແມ່ປະຊາຊົນທັງ 3 ບ້ານເຂົ້າຮ່ວມ.

ໂອກາດດັ່ງກ່າວ, ຄະນະຜູ້ແທນ ໄດ້ເຜີຍແຜ່ຜົນຂອງກອງປະຊຸມປະກອບມີບັນດາມະຕິ, ກົດໝາຍ ແລະ ເນື້ອໃນບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງ ຊຸດທີ II; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ຮັບຄຳສະເໜີຈາກຜູ້ມີສິດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງ.

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK

ຖ້າທ່ານມີບັນຫາເຂົ້າເຖິງ ເວັບໄຊ ສະພາແຫ່ງຊາດ
www.na.gov.la
ໂທ: +856-21 840 430
Email: Phouthen@gmail.com
ຂ່າວຜູ້ແທນປະຊາຊົນ Facebook Page is available now
Use QR code scaner's to scan and it will take you directly to.

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ